# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ກໍລະກົດ 2025
ປີທີ 14
ສະບັບທີ 1027
ລາຍສັບປະດາ


## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຂອງລັດຖະມົນຕີກະຊວງການຕ່າງປະເທດເບລາຣຸດຊີ



(ສພຊ) - ຕອນສວາຍ ວັນທີ18 ກໍລະກົດນີ້ທີ່ຫ້ອງຮັບແຂກລ້ານຊ້າງຂອງສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ມັກຊິມ ຣິເຊັນໂກຟ (Maxim Ryzhenkov) ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສ.ເບລາຣຸດຊີ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢ່າງເປັນທາງການ ຢູ່ ສປປລາວ ໃນລະຫວ່າງວັນທີ 16-18 ກໍ

ອ່ານຕໍ່ໜ້າ 8

## ຜົນກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ I ປີ 2025




(ສພຊ) - ຕອນແລງວັນທີ 16 ກໍລະກົດນີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ສອນໄຊ ສິດພະໄຊ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ໂຄສົກລັດຖະບານ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ I ປີ 2025 ເຊິ່ງໃຫ້ຮູ້ວ່າ: ກອງ

ອ່ານຕໍ່ໜ້າ 6

## ຮອງປະທານສະພາແຫ່ງຊາດເຄື່ອນໄຫວວຽກງານຢູ່ແຂວງຄຳມ່ວນ




(ສພຊ) - ໂດຍປະຕິບັດຕາມພາລະບົດບາດຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ, ແຕ່ວັນທີ 13-17 ກໍລະກົດ 2025, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະ

ອ່ານຕໍ່ໜ້າ 8



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ບໍ່ມີກົດໝາຍ ຫຼື ປະຕິບັດກົດໝາຍແບບບໍ່ເຄັ່ງຄັດ ເປັນສາເຫດພາໃຫ້ມີການຕ້ອງໂທດ, ເປັນບໍ່ເກີດແຫ່ງຄວາມອະທຳ, ລ່ວງອຳນາດ ແລະ ຈະພາໄປເຖິງບ່ອນມ້າງເພຄວາມສາມັກຄີ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ພາໃຫ້ເກີດແນວຄິດເອກະທິປະໄຕ, ຂາດປະຊາທິປະໄຕ.

(ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 202)

ຄຽງຄູ່ກັບການສ້າງກົດໝາຍ ຕ້ອງໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ພົນລະເມືອງທຸກຄົນ ມີສະຕິຕໍ່ກົດໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

(ບົດໂອ້ລົມຂອງປະທານ ໄກສອນ ພົມວິຫານ, ພົມຈຳໜ່າຍໂດຍການສຶກສາ ປີ 1990, ໜ້າ 14)

ອ່ານຕໍ່ສະບັບໜ້າ




## ຮຽບຮຽງເນື້ອໃນກົດໝາຍສັງຄົມສົງເຄາະ




(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍສັງຄົມສົງເຄາະ ໄດ້ຈັດຂຶ້ນໃນວັນທີ 15 ກໍລະກົດຜ່ານມາ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ); ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການພາຍໃນ ສພຊ, ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ມີຄຳເຫັນວ່າ: ຮ່າງກົດໝາຍວ່າດ້ວຍສັງຄົມສົງເຄາະ ມີບັນດາສະມາຊິກສະພາແຫ່ງຊາດ (ສສຊ) 38 ທ່ານ ປະກອບຄຳເຫັນໃສ່ 43 ມາດຕາ ກວມເອົາ 137 ເນື້ອໃນ, ຄະນະຮັບຜິດຊອບປັບປຸງກົດໝາຍ ໄດ້ຄົ້ນຄວ້າພິຈາລະນາປັບປຸງໃນເບື້ອງຕົ້ນ ເຊິ່ງທ່ານຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກໍໄດ້ລາຍງານຜົນການປັບປຸງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໃນຕອນບ່າຍຂອງວັນທີ 25 ມິຖຸນາ 2025

ອ່ານຕໍ່ໜ້າ 12

## ພົທ. ສຸວອນ ເລືອງບຸນມີ ຕ້ອນຮັບການຢ້ຽມຂ່ຳນັບຂອງຮອງປະທານກຳມາທິການຊົນເຜົ່າ



ອ່ານຕໍ່ໜ້າ 6



ໝາກມອນ... (ໜ້າ 9)



ສະພານຫ່ງຊາດຫວຽດນາມ... (ໜ້າ 11)

ເຫົ່າໄວ້ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

ຮ່ວມມືກັບສະກັດກັ້ນ... (ໜ້າ 12)

# ກິດຈະກຳແຂ່ງຂັນບານເຕະມິດຕະພາບ



(ສພຊ) - ຕອນແລງວັນສຸກທີ 18 ກໍລະກົດຜ່ານມາ ທີ່ເດີ່ນບານເຕະເຟີຣາຣີ ນະຄອນຫຼວງວຽງຈັນ, ໄດ້ມີກິດຈະກຳແຂ່ງຂັນກິລາບານເຕະມິດຕະພາບລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ສະພາແຫ່ງຊາດ; ໂດຍມີທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ, ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພະນັກງານ ແລະ ນັກກິລາຂອງ 2 ພາກສ່ວນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທັງນີ້, ກໍເພື່ອສ້າງຂະບວນການຂໍ່ານັບຮັບຕອນວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ (20/7/1955-20/7/2025) ທັງເປັນການສ້າງກິດຈະກຳພົບປະແລກປ່ຽນ, ຮັດແໜ້ນມິດຕະພາບ ແລະ ຄວາມສາມັກຄີ ລະຫວ່າງ ທະນາຄານແຫ່ງ ສປປລາວ ກັບ ສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

# ຮຽບຮຽງເນື້ອໃນກົດໝາຍຊົນລະປະທານ




(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍຊົນລະປະທານ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນວັນທີ 17-18 ກໍລະກົດນີ້ທີ່ເມືອງປາກຊັນ ແຂວງບໍລິຄຳໄຊ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການກົດໝາຍ, ເຂົ້າຮ່ວມມີທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ, ບັນດາທ່ານຮອງປະທານກຳມາທິການທີ່ກ່ຽວຂ້ອງພາຍໃນສພຊ, ທີ່ປຶກສາທາງດ້ານກົດໝາຍຂອງ ຄປຈສພຊ, ຄະນະກົມ ແລະ ພະແນກ ພ້ອມດ້ວຍພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳແພງ ວິລະພັນ ມີຄຳເຫັນວ່າ: ກົດໝາຍວ່າດ້ວຍຊົນລະປະທານ ໄດ້ຜ່ານການພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 20 ມິຖຸນາ 2025 ມີສະມາຊິກສະພາແຫ່ງຊາດ (ສສຊ) ຈຳນວນ 11 ທ່ານປະກອບຄຳເຫັນກວມເອົາ 36 ມາດຕາ ເຊິ່ງບັນດາຄຳຄິດຄຳເຫັນເຫຼົ່ານັ້ນ ຄະນະຮັບຜິດຊອບກໍໄດ້ຄົ້ນຄວ້າພິຈາລະນາປັບປຸງເນື້ອໃນເບື້ອງຕົ້ນ ແລະ ລາຍງານຜົນການປັບປຸງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ໃນວັນທີ 25 ມິຖຸນາ 2025 ເພື່ອໃຫ້ບັນດາທ່ານ ສສຊ ຮັບຮອງເອົາດ້ວຍຄະແນນສຽງເຫັນດີຫຼາຍກວ່າ 97% ຂອງຈຳນວນທີ່ເຂົ້າຮ່ວມ; ເຖິງຢ່າງໃດກໍຕາມ, ຍັງມີເນື້ອໃນຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ຄົ້ນຄວ້າ, ປັບປຸງ ແລະຮຽບຮຽງຄືນ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ຮັດກຸມແລະສາມາດນຳເຂົ້າລາຍງານຕໍ່ກອງປະຊຸມ ຄປຈສພຊ ພິຈາລະນາ ກ່ອນນຳສະເໜີປະທານປະເທດ ພິຈາລະນາອອກລັດຖະດຳລັດປະກາດໃຊ້.

ປະທານກຳມາທິການກົດໝາຍ ກ່າວອີກວ່າ: ກອງປະຊຸມຮຽບຮຽງເນື້ອໃນກົດໝາຍສະບັບນີ້ ຈະໄດ້ພ້ອມກັນຄົ້ນຄວ້າ ແລະ ເລືອກເຟັ້ນເອົາບັນດາຄຳຄິດຄຳເຫັນຂອງ ສສຊ ທີ່ມີເຫດມີຜົນປັບປຸງໃສ່ ແນໃສ່ເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນແລະສາມາດຈັດຕັ້ງປະຕິບັດໄດ້.

**(ອານຸສອນ ພູມມີທອນ)**

# ກອງປະຊຸມ AIPA Caucus ຄັ້ງທີ 16




(ສພຊ) - ວັນທີ 14-17 ກໍລະກົດນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ແລະ ທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ໄດ້ເຂົ້າຮ່ວມກອງປະຊຸມຄະນະປະສານງານສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA Caucus) ຄັ້ງທີ 16 ພາຍໃຕ້ຫົວຂໍ້ "ສັນຕິພາບຜ່ານການເຈລະຈາ ເພື່ອລັດຖະສະພາກ້າວໄປຂ້າງໜ້າ" ທີ່ນະຄອນຫຼວງພະນົມເປັນ, ລາຊະອານາຈັກກຳປູເຈຍ ເຊິ່ງມີຄະນະຜູ້ແທນຈາກ 15 ປະເທດ ແລະ 3 ຄູ່ຮ່ວມພັດທະນາຂອງໄອປາ (AIPA) ເຂົ້າຮ່ວມ 100 ກວ່າທ່ານ ໃນນີ້, ມີປະທານສະພາແຫ່ງຊາດກຳປູເຈຍ, ເລຂາທິການໃຫຍ່ໄອປາ, ເລຂາທິການໃຫຍ່ອາຊຽນ, ຄະນະຜູ້ແທນຈາກປະເທດສະມາຊິກໄອປາ ຄື: ບຣູໄນດາຣູຊາລາມ, ອິນໂດເນເຊຍ, ລາວ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ, ຫວຽດນາມ ແລະ ປະເທດເຈົ້າພາບພ້ອມດ້ວຍກອງເລຂາໄອປາ, ກອງເລຂາອາຊຽນ, ຄະນະຜູ້ແທນຈາກບັນດາປະເທດສັງເກດການ ແລະ ຄູ່ຮ່ວມພັດທະນາ, ພິເສດ ມີປະທານລັດຖະສະພາຕີມໍແລັດສະເຕເຂົ້າຮ່ວມ ເພື່ອກະກຽມເຂົ້າເປັນສະມາຊິກສົມບູນຂອງອາຊຽນ ແລະ ໄອປາ ໃນອະນາຄົດອັນໃກ້ນີ້.

ຄະນະຜູ້ແທນໄດ້ພ້ອມກັນທົບທວນຄືນ, ສົນທະນາ ແລະປຶກສາຫາລືກັນຢ່າງກົງໄປກົງມາ ແລະ ສ້າງສັນ ກ່ຽວກັບການຈັດຕັ້ງປະຕິບັດມະຕິ 20 ສະບັບ ໃນຂົງເຂດວຽກງານການເມືອງ, ເສດຖະກິດ, ສັງຄົມ, ສະມາຊິກລັດຖະສະພາເພດຍິງ ແລະ ສະມາຊິກລັດຖະສະພາໜຸ່ມຂອງໄອປາທີ່ໄດ້ຮັບຮອງເອົາໃນກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນ, ສປປລາວ ໃນປີ 2024.

ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ລາຍງານ ແລະ ປະກອບຄຳເຫັນຮ່ວມກັບບັນດາປະເທດສະມາຊິກໄອປາ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບັນດາມະຕິຕ່າງໆຂອງກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ໂດຍສະເພາະແມ່ນ: 1) ການຊຸກຍູ້ສົ່ງເສີມການຮ່ວມມືຂອງລັດຖະສະພາອາຊຽນ ໃນການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2025, ແຜນແມ່ບົດພາຍໃຕ້ 3 ເສົາຄໍ້າປະຊາຄົມອາຊຽນ ກໍຄືແຜນແມ່ບົດວ່າດ້ວຍການເຊື່ອມຈອດ 2025 ແລະ ແຜນປະຕິບັດງານວ່າດ້ວຍການເຊື່ອມໂຍງອາຊຽນ; 2) ການປະກອບສ່ວນຂອງ ສປປລາວ ໃນການສະກັດກັ້ນແລະແກ້ໄຂບັນຫາຢາເສບຕິດ, ການສ້າງນະວັດຕະກຳດ້ານສຸຂະພາບດິຈິຕອນຂອງລັດຖະບານ, ນະໂຍບາຍສົ່ງເສີມສິດດ້ານປະກັນສັງຄົມໃນການປະກອບວຽກເຮັດງານທຳຕໍ່ຜູ້ອາຍຸສູງ, ການຕິດຕາມແລະກວດກາການນຳໃຊ້ມາດຕະການຕ່າງໆ ຕໍ່ຜູ້ທີ່ລະເມີດກົດໝາຍ ແລະລະບຽບການກ່ຽວກັບການຄວບຄຸມຢາສູບ-ຢາສູບໄຟຟ້າ ແລະ ບັນດາສານເຄມີທີ່ຕ້ອງຫ້າມ; 3) ການນຳໃຊ້ເຕັກໂນໂລຊີດິຈິຕອນເປັນເຄື່ອງມືສຳຄັນໃນການຂັບເຄື່ອນວຽກງານທຸກຂະແໜງການເພື່ອສ້າງເສດຖະກິດດິຈິຕອນ ແນໃສ່ປະກອບສ່ວນເຂົ້າໃນການດັດປັບໂຄງສ້າງເສດຖະກິດຂອງປະເທດ, ການຊຸກຍູ້ ແລະ ສົ່ງເສີມການພັດທະນາການທ່ອງທ່ຽວອາຊຽນ, ການສ້າງຕັ້ງ ແລະ ພັດທະນາຕະຫຼາດກາກບອນຢູ່ພູມີພາກອາຊຽນ, ການຍົກລະດັບລະບົບຄົມມະນາຄົມ-ຂົນສົ່ງໃຫ້ມີການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ, ການຊຸກຍູ້ ແລະ ສົ່ງເສີມປັນຍາປະດິດເຂົ້າໃນທຸກຂົງເຂດວຽກງານ; 4) ການຊຸກຍູ້ ແລະ ສົ່ງເສີມຄວາມສະເໝີພາບຍິງ-ຊາຍໃນພາກພື້ນອາຊຽນ; 5) ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມໃນການສ້າງປະຊາຄົມອາຊຽນທີ່ປອດໄພ ແລະ ຊຸກຍູ້ການເຂົ້າຮ່ວມຂອງສະມາຊິກສະພາໜຸ່ມໃນການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງໃນອາຊຽນ.

ກອງປະຊຸມໄດ້ເຫັນດີເປັນເອກະພາບ ແລະ ລົງລາຍເຊັນຮັບຮອງເອົາບົດລາຍງານຂອງກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 16 ເພື່ອນຳໄປລາຍງານໃນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 46 ທີ່ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ ທີ່ໄດ້ຮັບກຽດເປັນເຈົ້າພາບໃນເດືອນກັນຍາ 2025; ພ້ອມນັ້ນ, ຍັງໄດ້ຕົກລົງເຫັນດີໃຫ້ປະເທດອິນໂດເນເຊຍ ເປັນເຈົ້າພາບຈັດກອງປະຊຸມຄະນະປະສານງານໄອປາຄັ້ງທີ 17 ໃນປີ 2026.

ນອກຈາກນັ້ນ, ຄະນະຜູ້ແທນລາວ ຍັງໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືກັບບັນດາປະເທດສັງເກດການ ແລະ ຄູ່ຮ່ວມພັດທະນາຂອງ AIPA ພ້ອມທັງປະກອບຄຳຄິດຄຳເຫັນຕໍ່ກອງປະຊຸມ ພາຍໃຕ້ 3 ຫົວຂໍ້ຍ່ອຍ: 1) ເພີ່ມທະວີການດຳເນີນງານຂອງລັດຖະສະພາເພື່ອສັນຕິພາບທີ່ກວມລວມ, 2) ການຮັບມືກັບຄວາມສ່ຽງ ແລະ ສິ່ງທ້າທາຍຜ່ານການຮ່ວມມືຂອງລັດຖະສະພາ, 3) ສົ່ງເສີມການມີສ່ວນຮ່ວມຂອງລັດຖະສະພາຕໍ່ພາກພື້ນແລະສັນຕິພາບໃນທົ່ວໂລກແລະຄວາມປອດໄພ; ພ້ອມດຽວກັນ, ຍັງໄດ້ເຂົ້າຮ່ວມທັດສະນະສຶກສາຢ້ຽມຊົມສະຖານທີ່ທາງປະຫວັດສາດຕ່າງໆ ທີ່ທາງເຈົ້າພາບຈັດໃຫ້.



# ຄະນະຜູ້ແທນລາວ ສຳເລັດການ ເຂົ້າຮ່ວມກອງປະຊຸມໃຫຍ່ APF-50



(ສພຊ) - ວັນທີ 9-13 ກໍລະກົດ 2025 ທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳ, ປະທານກຳມາທິການການຕ່າງປະເທດ, ປະທານຄະນະສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງຂອງສະພາແຫ່ງຊາດລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງຄັ້ງທີ50(APF-50) ທີ່ນະຄອນຫຼວງປາຣີ, ປະເທດຝຣັ່ງ ໂດຍມີຄະນະຜູ້ແທນຫຼາຍກວ່າ 540 ທ່ານ ຈາກ 52 ປະເທດ ທີ່ເປັນສະມາຊິກ APF ແລະ ຈາກ 20 ອົງການຈັດຕັ້ງສາກົນ ທີ່ເປັນຕົວແທນຈາກອົງການລັດຖະສະພາປະຈຳພາກພື້ນຕ່າງໆຈາກທົ່ວໂລກ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ດຳເນີນໄປພາຍໃຕ້ຫົວຂໍ້: "ຝຣັ່ງໂກໂຟນີ, ປຽບເໝືອນສະໝໍເຮືອຢູ່ໃນໂລກທີ່ເຕັມໄປດ້ວຍວິກິດການ (La Francophonie, une ancre dans un monde en crise)". ໃນວາລະກອງປະຊຸມໃຫຍ່ປະຈຳປີນີ້, ຍັງມີກອງປະຊຸມຄະນະບໍລິຫານງານAPF, ກອງປະຊຸມເຄືອຂ່າຍສະມາຊິກລັດຖະສະພາເພດຍິງ, ກອງປະຊຸມເຄືອຂ່າຍສະມາຊິກລັດຖະສະພາໜຸ່ມ ແລະ ກອງປະຊຸມ 4 ກຳມາທິການປະຈຳຂອງ APF ທີ່ຈັດຂຶ້ນຄວບຄູ່ກັນໄປ ເຊັ່ນ: ກຳມາທິການການເມືອງ; ກຳມາທິການວຽກງານລັດຖະສະພາ; ກຳມາທິການເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ; ກຳມາທິການສຶກສາ, ວັດທະນະທຳ ແລະ ການສື່ສານ.

ໃນກອງປະຊຸມໃຫຍ່, ບັນດາຜູ້ແທນຈາກປະເທດຕ່າງໆ ໄດ້ຂຶ້ນກ່າວປາໄສພາຍໃຕ້ຫົວຂໍ້ຂອງກອງປະຊຸມ ໂດຍຍົກໃຫ້ເຫັນສະພາບບັນຫາແລະສິ່ງທ້າທາຍ ທີ່ໂລກພວກເຮົາກຳລັງປະເຊີນໜ້າ ເປັນຕົ້ນ: ຄວາມຂັດແຍ້ງທາງດ້ານກຳລັງອາວຸດ, ຄວາມຂັດແຍ້ງທາງດ້ານສົງຄາມການຄ້າ, ໄພທຳມະຊາດ, ຄວາມທຸກຍາກ ແລະ ອື່ນໆ ກາຍເປັນອຸປະສັກ ແລະ ໄພຂົ່ມຂູ່ຕໍ່ສັນຕິພາບ, ສະຖຽນລະພາບ, ການຮ່ວມມື, ການພັດທະນາ ແລະ ຊີວິດການເປັນຢູ່ຂອງປະຊາຊົນໃນປະເທດຕ່າງໆ ຢ່າງໜັກໜ່ວງ ເຊິ່ງຮຽກຮ້ອງໃຫ້ບັນດາປະເທດສະມາຊິກຝຣັ່ງໂກໂຟນີ ຕ້ອງເພີ່ມທະວີການຮ່ວມມື ແລະ ສົ່ງເສີມຄວາມສາມັກຄີ, ແລກປ່ຽນຂໍ້ມູນຂ່າວສານ ແລະ ປະສົບການທີ່ດີ ກ່ຽວກັບການປະຕິບັດໜ້າທີ່ດ້ານນິຕິບັນຍັດ ພ້ອມທັງຮ່ວມກັນປຶກສາຫາລື ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຢ່າງສັນຕິວິທີ.

ໂອກາດນີ້, ທ່ານ ສັນຍາ ປຣະເສີດ ຫົວໜ້າຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ກ່າວປາໄສໃນກອງປະຊຸມໃຫຍ່ຄົບຄະນະ ໂດຍທ່ານຢ້ຳຄືນນະໂຍບາຍການຕ່າງປະເທດຂອງ ສປປລາວ: ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ ຢ່າງສະເໝີຕົ້ນສະເໝີປາຍ; ຢຶດໝັ້ນຕາມເຈຕະນາລົມ ແລະຄວາມໝາຍໝັ້ນທາງດ້ານການເມືອງ ທີ່ຈະຮ່ວມມືກັບວົງຄະນະຍາດສາກົນ ແກ້ໄຂບັນດາຂໍ້ຂັດແຍ້ງ ແລະ ສິ່ງທ້າທາຍ ທີ່ພວມເກີດຂຶ້ນໃນພາກພື້ນຕ່າງໆ ແລະ ໃນໂລກ ດ້ວຍສັນຕິວິທີ ອັນໄດ້ປະກອບສ່ວນເຂົ້າໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ສັນຕິພາບ, ການຮ່ວມມືເພື່ອການພັດທະນາແບບຍືນຍົງ ໃນບັນດາປະເທດຝຣັ່ງໂກໂຟນີແລະຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ນອກນີ້, ທ່ານຍັງຍົກໃຫ້ເຫັນເຖິງບົດບາດຂອງສະພາແຫ່ງຊາດລາວ ໃນການຊຸກຍູ້, ສົ່ງເສີມການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ໂດຍໄດ້ມີການຮັບຮອງເອົາກົດໝາຍຫຼາຍສະບັບທີ່ສອດຄ່ອງກັບຫຼັກການສາກົນ ແລະ ມີການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ກໍຄືການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພ້ອມທັງບົດບາດໃນການໃຫ້ສັດຕະຍາບັນແກ່ສົນທິສັນຍາ ເປັນຕົ້ນແມ່ນສົນທິສັນຍາກ່ຽວກັບການຕ້ານອາຊະຍາກຳຂ້າມຊາດ, ການຄ້າມະນຸດ, ການຕ້ານການກໍ່ການຮ້າຍ, ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງຄອມພິວເຕີ, ການເກືອດຫ້າມອາວຸດນິວເຄລຍ ແລະ ອື່ນໆ ເຊິ່ງບັນດາສົນທິສັນຍາເຫຼົ່ານັ້ນ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເສີມສ້າງສັນຕິພາບ, ຄວາມໝັ້ນຄົງ, ສະຖຽນລະພາບ, ການພັດທະນາແບບຍືນຍົງ ແລະ ຄວາມຢູ່ດີກິນດີຂອງປະຊາຊົນ ໃນພາກພື້ນ ແລະ ໃນໂລກ; ພ້ອມດຽວກັນນີ້, ທ່ານຍັງແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບການປັບປຸງລັດຖະທຳມະນູນແຫ່ງ ສປປລາວ ແລະ ກົດໝາຍກ່ຽວຂ້ອງຈຳນວນໜຶ່ງ ເພື່ອໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການເຊື່ອມໂຍງກັບສາກົນໃນໄລຍະໃໝ່ ພ້ອມທັງຮຽກຮ້ອງມາຍັງລັດຖະສະພາສະມາຊິກ APF ຈົ່ງເພີ່ມທະວີບົດບາດການທູດລັດຖະສະພາທັງໃນກອບສອງຝ່າຍ ແລະ ຫຼາຍຝ່າຍເພື່ອເປັນອີກຊ່ອງທາງໜຶ່ງທີ່ສຳຄັນໃນການແກ້ໄຂບັນດາບັນຫາ ແລະ ຂໍ້ຂັດແຍ້ງຕ່າງໆຢ່າງສັນຕິວິທີ ຜ່ານຂະບວນການເຈລະຈາ, ຍຶດຫຼັກການ ແລະ ລະບຽບການສາກົນ ໃນການປະກອບສ່ວນເຂົ້າໃນການສົ່ງເສີມສັນຕິພາບ, ສະຖຽນລະພາບ, ຄວາມໝັ້ນຄົງຂອງພາກພື້ນ ແລະ ໂລກ.

# ຮຽບຮຽງເນື້ອໃນກົດໝາຍປ້າຍ



(ສພຊ) - ວັນທີ 14 ກໍລະກົດນີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍປ້າຍ (ປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການທີ່ກ່ຽວຂ້ອງພາຍໃນ ສພຊ, ຮອງລັດຖະມົນຕີກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ບັນດາທ່ານຄະນະຮັບຜິດຊອບປັບປຸງກົດໝາຍ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ.

ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນຕໍ່ທີ່ປະຊຸມເຊິ່ງທ່ານ ໄດ້ກ່າວວ່າ: ກົດໝາຍວ່າດ້ວຍປ້າຍ ໄດ້ຖືກພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີIX ໃນຕອນບ່າຍຂອງວັນທີ 25 ມິຖຸນາ 2025 ດ້ວຍຄະແນນສຽງເຫັນດີຫຼາຍກວ່າ 89% ເຊິ່ງກອງປະຊຸມຮຽບຮຽງຄັ້ງນີ້ ຈະໄດ້ກວດກາຄືນເນື້ອໃນທີ່ໄດ້ປັບປຸງຕາມຄຳເຫັນຂອງສະມາຊິກສະພາແຫ່ງຊາດ; ນອກຈາກນັ້ນ, ຄຳເຫັນໃດທີ່ຜູ້ແທນສະເໜີແຕ່ຄະນະຮັບຜິດຊອບບໍ່ໄດ້ປັບປຸງ ຫຼື ເນື້ອໃນມາດຕາໃດທີ່ກຳນົດ ແຕ່ເຫັນວ່າຍັງບໍ່ສອດຄ່ອງ, ບໍ່ຈະແຈ້ງ ແລະ ຍັງບໍ່ຮັດກຸມ ກໍຍົກຂຶ້ນມາປຶກສາຫາລືກັນຕື່ມ ເພື່ອຮັບປະກັນໃຫ້ກົດໝາຍສະບັບນີ້ ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ. ພ້ອມກັນນັ້ນ, ຫາກມີເນື້ອໃນ ແລະ ບັນຫາໃດ ທີ່ກອງປະຊຸມບໍ່ສາມາດຕົກລົງເປັນເອກະພາບກັນໄດ້ ຈະໄດ້ນຳສະເໜີຂໍຄຳເຫັນຈາກກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕື່ມ.

**(ສອນສັກ ວັນວິໄຊ)**



# ສະມາຄົມການສຶກສາພາກເອກະຊົນ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ຕອນສວາຍ ວັນທີ17 ກໍລະກົດຜ່ານມາ, ກົມສື່ມວນຊົນ ແລະ ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ນຳພາສະມາຊິກ 3 ອົງການຈັດຕັ້ງມະຫາຊົນຂອງສະມາຄົມການສຶກສາພາກເອກະຊົນ ທີ່ມາທັດສະ ນະສຶກສາຢ້ຽມຊົມຫໍມູນເຊື້ອ ຈຳນວນ 60 ຄົນ ເຊິ່ງນຳໂດຍທ່ານ ອາຈານ ບຸນຕິ ສິດທິມົນທອງ ຮອງປະທານສະມາຄົມການສຶກສາພາກເອກະຊົນ ທັງເປັນຜູ້ຮັບຜິດຊອບວຽກງານ 3 ອົງການຈັດຕັ້ງມະຫາຊົນຂອງສະມາຄົມດັ່ງກ່າວ.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງ ສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ແລະ ຢ້ຽມຊົມຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເຮັດໃຫ້ບັນດາສະມາຊິກ 3 ອົງການຈັດຕັ້ງມະຫາຊົນຂອງສະມາຄົມການສຶກສາພາກເອກະຊົນ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ສອນສັກ ວັນວິໄຊ)**

# ຫາລືການກຳນົດຫົວໜ່ວຍລາຄາຊົດເຊີຍທີ່ຖືກຜົນກະທົບຈາກໂຄງການພັດທະນາ



(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ໄດ້ໄຂຂຶ້ນເມື່ອວັນທີ7 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານຄປຈສພຂເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການປະຈຳການແທນ, ປຶກສາຫາລືການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ9ຂອງ ສພຂ ຊຸດທີ II ແລະ ຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າແຂວງຈຳນວນໜຶ່ງ; ນອກນີ້, ຍັງໄດ້ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການບັນຈຸສັບຊ້ອນບຸກຄະລາກອນພາຍໃນສພຂ ຈຳນວນໜຶ່ງ.

ປະທານກອງປະຊຸມໄດ້ເນັ້ນໜັກໃຫ້ບັນດາຄະນະກຳມະການ, ຄະນະເລຂາທິການ ກໍຄືຄະນະຮັບຜິດຊອບກະກຽມແລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9 ຈົ່ງເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານສຳຄັນທີ່ຢູ່ໃນຄວາມຮັບ ຜິດຊອບຂອງຕົນໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ ແລະ ລາຍງານໃຫ້ຄະນະປະທານ ສພຂ ຮັບຊາບແຕ່ລະໄລຍະ ທັງລາຍງານຄືນໃນກອງປະຊຸມ ຄປຈສພຂ ປະຈຳເດືອນໃນຄັ້ງຕໍ່ໄປ.

ໃນວັນດຽວກັນ, ສພຂ ໄດ້ເປີດກອງປະຊຸມປຶກສາຫາລືກ່ຽວກັບການກຳນົດຫົວໜ່ວຍລາຄາຊົດເຊີຍທີ່ຖືກຜົນກະທົບຈາກໂຄງການພັດທະນາກະສິກຳ, ອຸດສາຫະກຳ, ການບໍລິການ ແລະ ການທ່ອງທ່ຽວ ເຂດດ່ານປາງໄຮ ເມືອງສິງ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ໂດຍມີທ່ານ ອ່ອນຈັນ ຄຳພາວົງ ຮອງເຈົ້າແຂວງ, ບັນດາທ່ານໃນ ຄປຈສພຂ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງລາຍງານໂດຍຫຍໍ້ກ່ຽວກັບການລົງທາບທາມ, ພົບປະປະຊາຊົນທີ່ຖືກຜົນກະທົບຈາກໂຄງການດັ່ງກ່າວຂອງບໍລິສັດ ຈະເລີນຊັບ ຍິ່ງຈະເລີນ ຈຳກັດ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ກໍໄດ້ປະກອບຄຳຄິດເຫັນດ້ວຍຄວາມຮັບຜິດຊອບສູງ. ຜ່ານການຄົ້ນຄວ້າການກຳນົດລາຄາຫົວໜ່ວຍຊົດເຊີຍເນື້ອທີ່ດິນປະເພດຕ່າງໆ ແລະ ຜົນລະປູກ ຕາມການສະເໜີຂອງປະຊາຊົນ, ບໍລິສັດເຫັນດີປັບເພີ່ມລາຄາຫົວໜ່ວຍຊົດເຊີຍຂຶ້ນ ເປັນຕົ້ນເນື້ອທີ່ດິນນາ ແລະ ຕົ້ນຢາງພາລາ.

ທ່ານ ຄຳຟອງ ອິນມານີ ມີຄຳເຫັນວ່າ: ໂຄງການດັ່ງກ່າວຖ້າໄດ້ຮັບການຈັດຕັ້ງປະຕິບັດຈະເຮັດໃຫ້ປະຊາຊົນມີວຽກເຮັດງານທຳຫຼາຍຂຶ້ນ; ມອບໃຫ້ຄະນະຮັບຜິດຊອບໂຄງການລົງທາບທາມປະຊາຊົນຄືນອີກ ເພື່ອເຮັດໃຫ້ການຊົດເຊີຍມີຄວາມເໝາະສົມ ພ້ອມທັງຮ່າງຂໍ້ຕົກລົງໃຫ້ມີເນື້ອໃນລະອຽດ ແລ້ວສົ່ງໃຫ້ສະມາຊິກສະພາປະຊາຊົນແຂວງ (ສສຂ)ຄົ້ນຄວ້າປະກອບຄຳຄິດເຫັນກ່ອນທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II.



ວັນທີ 8 ກໍລະກົດ, ສະພາປະຊາຊົນແຂວງ ໄດ້ຈັດຕັ້ງການບໍລິຈາກເລືອດໃຫ້ແກ່ອົງການກາແດງແຂວງ, ໂດຍມີທ່ານ ຄຳຟອງ ອິນມານີ, ບັນດາ ສສຂ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ 10 ກວ່າທ່ານ, ຜ່ານການບໍລິຈາກເລືອດແບບສະໝັກໃຈ ໄດ້ເລືອດຈຳນວນ 6 ຖົງ ເພື່ອນຳໄປຮັບໃຊ້ສັງຄົມ; ພ້ອມດຽວກັນ, ກໍໄດ້ມອບ ໃບຍ້ອງຍໍໃຫ້ແກ່ຜູ້ບໍລິຈາກເລືອດໃນຄັ້ງນີ້.

ວັນທີ 9 ກໍລະກົດ, ສະພາປະຊາຊົນແຂວງ ໄດ້ມອບເຄື່ອງພະລັງງານໄຟຟ້າແສງຕາເວັນ ຫຼື ໂຊລາເຊວ 2 ຊຸດ ໃຫ້ກອງບັນຊາການທະຫານແຂວງຫຼວງນ້ຳທາ ໂດຍທ່ານ ຄຳຟອງ ອິນມານີ ເປັນຜູ້ກ່າວມອບ ແລະ ທ່ານ ພັອ. ບຸນມີ ໄຊປະເສີດ ຫົວໜ້າການທະຫານກອງບັນຊາການທະຫານແຂວງ ເປັນຜູ້ກ່າວຮັບ ເຊິ່ງມີພະນັກງານຈາກສອງພາກສ່ວນ ເຂົ້າຮ່ວມເປັນສັກຂີພະຍານ, ເຄື່ອງທີ່ມອບຄັ້ງນີ້ ມີອາໄຫຼ່ຕິດຕັ້ງຄົບຊຸດ, ລວມມູນຄ່າທັງໝົດ 37,690,000 ກີບ ເພື່ອ ນຳໄປຕິດຕັ້ງໃຫ້ຄ້າຍທະຫານທີ່ຢູ່ເຂດຫ່າງໄກໄດ້ຊົມໃຊ້.

**(ອາເມີງ ວີແຄລູ)**





## ສພຂ ຫຼວງພະບາງ ພົບປະ ສະພານະຄອນແດຈອນ




(ສພຂ) - ວັນທີ 26 ມິຖຸນາຜ່ານມາ, ທ່ານ ສິງຕັນ ໄຊລີຊື່ງ ຮອງປະທານສະພາປະຊາຊົນແຂວງ (ສພຂ) ພ້ອມດ້ວຍຄະນະ ໄດ້ພົບປະກັບທ່ານ ລີ ໂຮຊອງ ປະທານສະພານະຄອນແດຈອນ, ສາທາລະນະລັດເກົາຫຼີ ພ້ອມດ້ວຍ ຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກທີ່ແຂວງຫຼວງພະບາງ ເພື່ອພັດທະນາການຮ່ວມມື, ການພົວພັນມິດຕະພາບ ແລະ ການສົ່ງເສີມທາງດ້ານເສດຖະກິດ, ການສຶກສາ, ວັດທະນະທຳ, ການທ່ອງທ່ຽວ, ສາທາລະນະລະສຸກ, ການດັບເພີງ, ກະສິກຳແລະການໄປມາຫາສູ່ກັນຂອງຄະນະຜູ້ແທນ ເພື່ອຮັດແໜ້ນສາຍພົວພັນມິດຕະ ພາບ ບົນພື້ນຖານຄວາມເຊື່ອໝັ້ນຕໍ່ກັນ ແລະການຮ່ວມມືກັນ.

ໃນການພົບປະ, ທັງສອງຝ່າຍໄດ້ແລກປ່ຽນບົດຮຽນກັນໃນວຽກງານຂອງອົງການນິຕິບັນຍັດຂັ້ນທ້ອງຖິ່ນ ແລະ ບາງຫົວຂໍ້ທີ່ມີຄວາມສົນໃຈ.

ສະພານະຄອນແດຈອນ ຍັງໄດ້ມອບຄອມພິວເຕີຕັ້ງໂຕະ 10 ເຄື່ອງ, ແທັບເລັດ 3 ເຄື່ອງ ແລະ ໂປຣເຈັກເຕີ 4 ເຄື່ອງ ລວມມູນຄ່າ 220 ລ້ານກີບ ໃຫ້ ສພຂ ຫຼວງພະບາງ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**(ວິລິຍະ)**

## ຍົກສູງຄວາມຮັບຮູ້ດ້ານບົດບາດທາງເພດ ແລະ ກຳຈັດແນວຄິດຄັບແຄບໃນສະຖານທີ່ເຮັດວຽກ



(ສພຂ) - ວັນທີ 23-25 ມິຖຸນາຜ່ານມາທີ່ເມືອງນ້ຳບາກ ແຂວງຫຼວງພະບາງ, ສະພາປະຊາຊົນແຂວງ (ສພຂ) ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານຄວາມສະເໝີພາບ, ຄວາມຫຼາກຫຼາຍ ແລະ ພາວະຜູ້ນຳ ໃນສະຖານທີ່ເຮັດວຽກ ໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງ ຂອງ 11 ເມືອງ ແລະ 1 ນະຄອນ, ໂດຍການເປັນປະທານຂອງທ່ານ ສິງຕັນ ໄຊລີຊື່ງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານກຳມະການພັກແຂວງ, ເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ 11 ເມືອງ ແລະ 1 ນະຄອນ ແລະ ຜູ້ຕາງໜ້າຈາກສະຫະພັນແມ່ຍິງແຂວງ ລວມຜູ້ເຂົ້າຮ່ວມທັງໝົດ 98 ທ່ານ, ຍິງ 27 ທ່ານ; ຈຸດປະສົງແມ່ນເພື່ອສ້າງຄວາມເຂົ້າໃຈພື້ນຖານກ່ຽວກັບເພດພາວະ, ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມໃນວຽກງານນິຕິບັນຍັດ, ຍົກລະດັບຄວາມສະເໝີພາບດ້ານເພດພາວະກໍຄືການຍົກສູງຄວາມຮັບຮູ້ດ້ານບົດບາດທາງເພດ ແລະ ກຳຈັດແນວຄິດຄັບແຄບໃນສະຖານທີ່ເຮັດວຽກ ເພື່ອສົ່ງເສີມ ການມີສ່ວນຮ່ວມທີ່ແນໃສ່ຄວາມເທົ່າທຽມ ແລະ ການຕັດສິນໃຈທີ່ຖືກຕ້ອງ, ຍຸຕິທຳ.

ການເຝິກອົບຮົມຄັ້ງນີ້ ມີທັງໝົດ 12 ເນື້ອໃນ ເຊິ່ງນຳໃຊ້ວິທີການແບບມີສ່ວນຮ່ວມ

ອ່ານຕໍ່ໜ້າ 11

# 3 ກົງຈັກການຈັດຕັ້ງແຂວງສະຫວັນນະເຂດ ເປັນອົງການລັດທຽບເທົ່າພະແນກການ



(ສພຂ) - ວັນທີ 30 ມິຖຸນາຜ່ານມາ, ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ1 ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງສະຫວັນນະເຂດ, ບັນດາທ່ານການນຳພັກ-ລັດຂອງແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າພະແນກການ-ອົງການລັດທຽບເທົ່າພະແນກຂອງແຂວງ, ອົງການກວດສອບປະຈຳພາກກາງ 2, ເລຂາພັກຄອນໄກສອນພົມວິຫານ, ບັນດາເລຂາພັກເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານບຸນໂຈມ ອຸບົນປະເສີດ ໄດ້ຜ່ານບົດສະເໜີການປັບປຸງກົງຈັກການຈັດຕັ້ງບັນດາພະແນກການ, ອົງການລັດທຽບເທົ່າພະແນກຂອງແຂວງ ຄື: 1. ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນເປັນພະແນກການເງິນ; 2. ໂຮມພະແນກພະລັງງານແລະບໍ່ແຮ່ ເຂົ້າກັບພະແນກອຸດສາຫະກຳ ແລະ ການຄ້າ ເປັນພະແນກອຸດສາຫະກຳ ແລະ ການຄ້າ; 3. ໂຮມພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເປັນພະແນກກະສິກຳ ແລະ ສິ່ງແວດລ້ອມ; 4. ໂຮມພະແນກພາຍໃນ ເຂົ້າກັບຄະນະຈັດຕັ້ງແຂວງ, ຫ້ອງວ່າການແຂວງແລະພະແນກການອື່ນທີ່ກ່ຽວຂ້ອງ; 5. ໂອນວຽກຖະແຫຼງຂ່າວອອກຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງພ້ອມທັງປ່ຽນຊື່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນພະແນກວັດທະນະທຳ ແລະ ການທ່ອງທ່ຽວ; 6. ສຳລັບວຽກ, ກົງຈັກລະອຽດ (ຂະແໜງ, ໜ່ວຍງານ...) ຂອງແຕ່ລະພະແນກທີ່ຖືກໂຮມ, ຍຸບ, ໂອນ ຈະໄປຂຶ້ນກັບພາກສ່ວນໃດນັ້ນ ແມ່ນປະຕິບັດຕາມກົງຈັກຂັ້ນສູນກາງທີ່ຖືກຮັບຮອງ ແລະ ຕາມການຕົກລົງຂອງຂັ້ນເທິງ; 7. ສະເໜີຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາ 3 ກົງຈັກການຈັດຕັ້ງ: ອົງການກາແດງແຂວງ, ດ່ານສາກົນຂົວມິດຕະພາບ ລາວ-ໄທ 2 ແລະ ດ່ານສາກົນແດນສະຫວັນ ເປັນອົງການລັດທຽບເທົ່າພະແນກການຂອງແຂວງ.

ຈາກນັ້ນ, ບັນດາທ່ານສະມາຊິກສະພາ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ການສະເໜີ ແລະ ຮ່າງມະຕິໃນການຄົ້ນຄວ້າ, ເລືອກເຟັ້ນ, ສັບຊ້ອນ, ຈັດວາງພະນັກງານ-ລັດຖະກອນຄືນໃໝ່ຢ່າງຮັດກຸມ ແລະ ເປັນລະບົບ, ການຈັດສັນງົບປະມານເພື່ອຮັບໃຊ້ວຽກງານດັ່ງກ່າວຕາມລະບຽບການ ແລະ ເອົາໃຈໃສ່ນຳພາການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ ມີຄວາມຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີຕາມແຜນການທີ່ວາງໄວ້.

ກອງປະຊຸມໄດ້ຮັບຮອງເອົາບົດສະເໜີການປັບປຸງກົງຈັກການຈັດຕັ້ງພະແນກການ ດ້ວຍຄະແນນສຽງເຫັນດີ 45 ສຽງ ຂອງສະມາຊິກສະພາທີ່ເຂົ້າຮ່ວມ 47 ທ່ານ, ເທົ່າກັບ 95.74% ແລະ ຮັບຮອງເອົາອົງການລັດທຽບເທົ່າ ດ້ວຍຄະແນນສຽງເຫັນດີ 46 ສຽງ ຂອງສະມາຊິກສະພາທີ່ເຂົ້າຮ່ວມ 47 ທ່ານ, ເທົ່າກັບ 97.87%.

**(ນາງຄອນສະຫວັນ ເມກສະຫວັນ ແລະ ວັນນະສຸກ ອິນສີຊຽງໃໝ່)**

# ຕິດຕາມກວດກາການປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ 6 ເດືອນຕົ້ນປີຂອງເມືອງອານຸວົງ



(ສພຂ)-ວັນທີ23-27 ມິຖຸນາຜ່ານມາ, ທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງ(ສພຂ)ໄຊສົມບູນ, ທ່ານ ນາງ ຄຳຫຼ້າ ທອງສີວອນ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ເມືອງອານຸວົງ ເພື່ອຊຸກຍູ້ບັນດາຂະແໜງການໃນການຜັນຂະຫຍາຍແລະຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ2024ແລະທິດທາງແຜນການປີ2025; ຕິດຕາມບັນດາຜົນກະທົບທາງສັງຄົມ, ສິ່ງແວດລ້ອມ ຂອງບາງໂຄງການທັງພາຍໃນ ແລະ ຕ່າງປະເທດ ຈາກການຂຸດຄົ້ນແຮ່ທາດຕ່າງໆຢູ່ພາຍໃນແຂວງ; ກວດກາ ແລະ ເກັບກຳ ສະພາບການຈັດຕັ້ງປະຕິບັດບາງໂຄງການລົງທຶນຂອງລັດ ແລະ ເອກະຊົນທີ່ພົ້ນເດັ່ນ ຂອງບັນດາຂະແໜງການຕ່າງໆຂອງແຂວງແລະບັນດາເມືອງ; ເກັບກຳສະພາບ ກໍຄືຜົນການຈັດຕັ້ງປະຕິບັດ ມາວິເຄາະ, ວິໄຈ, ຊອກຫາສາເຫດ, ມາດຕະການ ແລະ ວິທີການແກ້ໄຂເພື່ອນຳສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ.

ໃນການເຄື່ອນໄຫວ, ໄດ້ເປີດກອງປະຊຸມຮ່ວມກັບອົງການປົກຄອງເມືອງ ເພື່ອຮັບຟັງການລາຍງານໂດຍຫຍໍ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ6ເດືອນຕົ້ນປີ2025 ຂອງເມືອງອານຸວົງ ແລະ ການລາຍງານຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຈັດຕັ້ງປະຕິບັດໂຄງການພັດທະນາແຫຼ່ງທ່ອງທ່ຽວທຳມະຊາດເຂດຜາກະຕ່າຍ ແລະ ການຈັດຕັ້ງປະຕິບັດໂຄງການພັດທະນາແຫຼ່ງທ່ອງທ່ຽວຄີບວົງຈອນ ຢູ່ເຂດບ້ານໄຊຈະເລີນ; ນອກນັ້ນ, ຍັງໄດ້ຮັບຟັງການລາຍງານຂອງບັນດາຫ້ອງການຂອງເມືອງ ຄື: ແຜນການ ແລະການລົງທຶນ, ກະສິກຳແລະປ່າໄມ້, ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ຈາກນັ້ນ, ສະມາຊິກສະພາປະຊາຊົນແຂວງ ໄດ້ມີການຊັກຖາມ ແລະເຈາະຈີ້ມຕໍ່ພາກສ່ວນທີ່ກ່ຽວຂ້ອງ ໃນບາງບັນຫາທີ່ຍັງແກ້ໄຂບໍ່ໄດ້ ແລະ ແກ້ໄຂໄປແລ້ວໃນໄລຍະຜ່ານມາ.

ຄະນະຍັງໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດຕົວຈິງຢູ່ພາກສະໜາມຂອງໂຄງການພັດທະນາແຫຼ່ງທ່ອງທ່ຽວຄີບວົງຈອນ ຢູ່ເຂດບ້ານໄຊຈະເລີນ; ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຊືນ, ສັງກະສີ, ເງິນ, ທອງ ແລະ ຄຳ ເນື້ອທີ່ 41.12 ກມ$^2$ ແລະ ແຮ່ເຫຼັກ ເນື້ອທີ່ 39.72 ກມ$^2$ ຢູ່ບ້ານນ້ຳຍອນ ແລະ ບ້ານນ້ຳໂມງ; ໂຄງການສົ່ງເສີມການປູກຜັກ, ສະບຽງອາຫານ ແລະ ການລ້ຽງສັດໃຫຍ່ ຕິດພັນກັບໂຮງງານຜະລິດກິມຈິ ຢູ່ບ້ານພູຫົວຊ້າງ; ໂຄງການພັດທະນາແຫຼ່ງທ່ອງທ່ຽວທຳມະຊາດເຂດຜາກະຕ່າຍ ບ້ານຜາສະຫງົບ; ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທອງຢູ່ບ້ານອອມແລະບ້ານກໍໄຮ ເນື້ອທີ່ 24 ກມ$^2$ ຂອງບໍລິສັດ ລາວ-ຈີນ ພັດທະນາແຮ່ທາດ ຕາເວັນອອກໄກ ຈຳກັດ.

**(ແສງຕາວັນ ລັດຕະນະວົງ)**

# ສ້າງຄວາມຮັບຮູ້, ເຂົ້າໃຈ ຄວາມສະດຸ້ງໄວ ດ້ານເພດພາວະ ແລະ ຄວາມຫຼາກຫຼາຍ




(ສພຂ) - ວັນທີ 7-8 ກໍລະກົດຜ່ານມາ ທີ່ເມືອງຄູນຄຳ ແຂວງຄຳມ່ວນ, ສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມເຝິກອົບຮົມຄວາມສະດຸ້ງໄວດ້ານເພດພາວະ ແລະ ຄວາມຫຼາກຫຼາຍໃນສະຖານທີ່ເຮັດວຽກ, ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ(ຄປຈສພຂ); ເຂົ້າຮ່ວມມີທ່ານ ແກ້ວບຸນຂວັນ ໄຊຍະວົງສາ ເຈົ້າເມືອງເມືອງຄູນຄຳ, ບັນດາຮອງປະທານ ແລະ ກຳມະການໃນ ຄປຈສພຂ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ 10ເມືອງ, ພະນັກງານເສນາທິການຊ່ວຍວຽກຂອງ ສພຂ ແລະ ຫ້ອງວ່າການແຂວງ.

ທ່ານບຸນມີພິມມະສອນ ກ່າວວ່າ: ວຽກງານການສົ່ງເສີມຄວາມສະດຸ້ງໄວດ້ານເພດພາວະ ແລະ ຄວາມຫຼາກຫຼາຍ ໃນສະຖານທີ່ເຮັດວຽກ ແມ່ນມີຄວາມສຳຄັນແລະຈຳເປັນສຳລັບການສ້າງອົງກອນໃຫ້ມີຄວາມເທົ່າທຽມແລະຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນໄດ້ຢ່າງມີປະສິດທິພາບໃນຫຼາຍພາກສ່ວນ; ອະຄະຕິ, ສັນຍະ ລັກອຳນາດທີ່ບໍ່ເທົ່າທຽມ ແລະແບບແຜນປະເພນີດັ້ງເດີມອາດຈະຈຳກັດການມີສ່ວນຮ່ວມຂອງແມ່ຍິງ ແລະ ກຸ່ມຄົນດ້ອຍໂອກາດ.

ທ່ານ ອຈ. ປອ. ນາງ ຈຳປາທອງ ໂພຈັນທິລາດ ຫົວໜ້າສູນເພດພາວະສຶກສາ, ຄະນະວິທະຍາສາດສັງຄົມ, ມະຫາວິທະຍາໄລແຫ່ງຊາດ ໄດ້ບັນລະຍາຍ 7 ເນື້ອໃນຄື: ແນວຄວາມຄິດພື້ນຖານກ່ຽວກັບເພດພາວະ, ຄວາມສະເໝີພາບ, ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ; ນະໂຍບາຍ, ນິຕິກຳ ແລະ ສະຖິຕິ ທີ່ກ່ຽວຂ້ອງກັບການສົ່ງເສີມຄວາມສະເໝີພາບທາງເພດ; ແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ IV (2021-2025); ກໍລະນີ ສຶກສາອົງກອນທີ່ປະຕິບັດນະໂຍບາຍສົ່ງເສີມຄວາມຫຼາກຫຼາຍໃນສະຖານທີ່ເຮັດວຽກ; ລັກສະນະປະຈຳເພດໃນສັງຄົມ; ເພດພາວະ ແລະ ຄວາມຫຼາກຫຼາຍໃນບ່ອນເຮັດວຽກ; ແຜນດຳເນີນງານເພື່ອຄວາມສະເໝີພາບຍິງ-ຊາຍແລະການຕັດສິນໃຈແບບມີສ່ວນຮ່ວມ. ຈາກນັ້ນ, ໄດ້ມີການປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນເຊິ່ງກັນແລະກັນ, ຈັດແບ່ງກຸ່ມເພື່ອຄົ້ນຄວ້າ ແລະເຝິກຫັດຕົວຈິງແຕ່ລະເນື້ອໃນ, ຕັ້ງຄຳຖາມສົນທະນາແລກປ່ຽນໃນແຕ່ລະຫົວຂໍ້.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໄລຍະ II, ແຜນງານເຊກາ ໄລຍະ II (CEGGA II).

# ຄະນະພັກຮາກຖານ ສພຂ ເຊກອງ ເລືອກຜູ້ແທນ ເຂົ້າຮ່ວມກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ



(ສພຂ)-ຕອນບ່າຍວັນທີ 2 ກໍລະກົດຜ່ານມາ, ຄະນະພັກຮາກຖານສະພາປະຊາຊົນແຂວງ (ສພຂ) ໄດ້ຈັດກອງປະຊຸມສະມາຊິກພັກ ເພື່ອເລືອກເອົາຜູ້ແທນສົມບູນແລະສຳຮອງເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງເຊກອງໂດຍການເປັນປະທານຂອງສະຫາຍ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ເຊິ່ງມີຄະນະຮັບຜິດຊອບຂັ້ນແຂວງເຂົ້າຮ່ວມ; ສະຫາຍ ດົງເຜັດ ພະຍົນ ໄດ້ເນັ້ນໃຫ້ຄະນະພັກ, ສະມາຊິກພັກທຸກສະຫາຍ ເອົາໃຈໃສ່ຄົ້ນຄວ້າ, ພິຈາລະນາຢ່າງເລິກເຊິ່ງ ໃນການປ່ອນບັດຄັດເລືອກເອົາຜູ້ແທນສົມບູນ ແລະ ສຳຮອງ ທີ່ມີມາດຕະຖານເງື່ອນໄຂຄົບຖ້ວນ, ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ການເມືອງດ້ວຍຄວາມຮັບຜິດຊອບສູງ, ມີສຸຂະພາບແຂງແຮງດີ ເຊິ່ງຜູ້ແທນທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກແຂວງຕ້ອງໄດ້ຮັບການເລືອກຈາກສະມາຊິກພັກ 50% ຂຶ້ນໄປ.

ສະຫາຍ ດາຊີ ສຸວັນນະສາຍ ຮອງຫົວໜ້າຄະນະຈັດຕັ້ງແຂວງ ໄດ້ຜ່ານມາດຕະຖານ, ເງື່ອນໄຂ, ລະບຽບການ ແລະ ວິທີການປ່ອນບັດຄັດເລືອກຜູ້ແທນສົມບູນ-ສຳຮອງ; ຈາກນັ້ນ, ກໍໄດ້ດຳເນີນການປ່ອນບັດຄັດເລືອກໂດຍເລືອກໄດ້ສະຫາຍ ໃຈເຜັດ ພົນທະວົງ, ສະຫາຍ ນາງ ໄຮມະນີ ວົງຫໍ່ແກ້ວ, ສະຫາຍ ນາງ ລັດດາວຽງ ພົນທະນາໄລ ເປັນຜູ້ແທນສົມບູນແລະສະຫາຍ ນາງ ຄຳໄພ ວິລະສານ ເປັນຜູ້ແທນສຳຮອງ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີXI ຂອງອົງຄະນະພັກແຂວງ ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.

**(ນາລີວັນ)**




## ພົທ. ສຸວອນ...

(ຕໍ່ຈາກໜ້າ 1)

(ສພຊ)-ຕອນບ່າຍວັນທີ 14 ກໍລະກົດນີ້ ທີ່ສະພາແຫ່ງຊາດ, ສະຫາຍ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍຫວາງຈື້ໝິນ (WANG ZHIMIN) ຮອງປະທານກຳມາທິການຊົນເຜົ່າ, ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມແລະເຮັດວຽກຢູ່ສປປລາວ ລະຫວ່າງວັນທີ 14-15 ກໍລະກົດ 2025.

ສະຫາຍ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມແລະເຮັດວຽກຄັ້ງນີ້ ເປັນການສືບຕໍ່ຮັດແໜ້ນແລະເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເວົ້າລວມ, ເວົ້າສະເພາະລະຫວ່າງກຳມາທິການບັນດາເຜົ່າ ກັບ ກຳມາທິການຊົນເຜົ່າ; ປະກອບສ່ວນເພີ່ມທະວີສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງຍາວນານ ຕາມທິດ 4 ດີ ຄື: ບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ, ສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວທັງເປັນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂໍ້ຕົກລົງການຮ່ວມມືລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດແຫ່ງ ສປຈີນ ທີ່ໄດ້ລົງນາມໃນເດືອນກັນຍາ 2023 ໃຫ້ເຂົ້າສູ່ລວງເລິກ ແລະ ນັບມື້ເປັນຮູບປະທຳຍິ່ງໆຂຶ້ນ.

ສະຫາຍ ຫວາງ ຈື້ໝິນ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງຜົນການພົບປະສອງຝ່າຍລະຫວ່າງສອງກຳມາທິການ ເຊິ່ງໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ຕໍ່ການພົວພັນຮ່ວມມືໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ ພ້ອມທັງແລກປ່ຽນບົດຮຽນກ່ຽວກັບການປະຕິບັດພາລະບົດບາດດ້ານວຽກງານນິຕິບັນຍັດ, ວຽກງານຊົນເຜົ່າ, ວຽກງານການຫຼຸດຜ່ອນຄວາມທຸກຍາກ, ວຽກງານສາສະໜາ ແລະ ອື່ນໆ; ພ້ອມກັນນັ້ນ, ຍັງໄດ້ແຈ້ງໃຫ້ຊາບສະພາບການທີ່ພົ້ນເດັ່ນຂອງ ສປຈີນ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ອີກດ້ວຍ.

ກ່ອນໜ້ານີ້ ໃນຕອນບ່າຍວັນດຽວກັນ, ສະຫາຍ ຫວາງ ຈື້ໝິນ ໄດ້ພົບປະສອງຝ່າຍກັບສະຫາຍ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ເພື່ອປຶກສາຫາລືແລະແລກປ່ຽນຄຳຄິດຄຳເຫັນໃນຂົງເຂດວຽກງານທີ່ຕິດພັນກັບຄວາມຮັບຜິດຊອບແລະມີຄວາມສົນໃຈຮ່ວມກັນ ເຊິ່ງສອງຝ່າຍສະເໜີໃຫ້ສືບຕໍ່ແລກປ່ຽນຄະນະຜູ້ແທນນຳກັນ ຕິດພັນກັບການແລກປ່ຽນບົດຮຽນປະສົບການແລະຂໍ້ມູນຂ່າວສານທີ່ສຳຄັນ ໃນການຈັດຕັ້ງປະຕິບັດພາລະບົດບາດຂອງສອງກຳມາທິການ, ຊຸກຍູ້ ແລະ ສະໜັບສະໜູນການພົວພັນຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງການຮ່ວມມືລະຫວ່າງສອງສະພາ; ສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງກຳມາທິການບັນດາເຜົ່າ ກັບ ກຳມາທິການຊົນເຜົ່າ ໃນການຖອດຖອນບົດຮຽນເຊິ່ງກັນແລະກັນ ກ່ຽວກັບວຽກງານຕິດຕາມກວດກາການປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ, ການປະຕິບັດນະໂຍບາຍຊົນເຜົ່າທີ່ຢູ່ເຂດທຸກຍາກຫ່າງໄກສອກຫຼີກ, ວຽກງານພັດທະນາຊົນນະບົດ ຕິດພັນກັບການສ້າງບ້ານພັດທະນາ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ປະຊາຊົນ; ໃຫ້ມີການແລກປ່ຽນຄະນະຜູ້ແທນໃນລະດັບກົມ ແລະ ວິຊາການ ເພື່ອແລກປ່ຽນບົດຮຽນໃນການຈັດຕັ້ງປະຕິບັດພາລະບົດບາດການເປັນເສນາທິການໃຫ້ແກ່ກຳມາທິການຂອງສອງຝ່າຍ; ສືບຕໍ່ຮ່ວມມື, ສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນການ ເຄື່ອນໄຫວວຽກງານຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະກິດ)**



## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ປະຊຸມໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 15 ແລະ ປິດລົງໃນຕອນບ່າຍວັນທີ 16 ກໍລະກົດ 2025 ທີ່ຫໍປະຊຸມແຫ່ງຊາດ ພາຍໃຕ້ການເປັນປະທານຂອງທ່ານສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ເຂົ້າຮ່ວມມີບັນດາທ່ານຮອງນາຍົກລັດຖະມົນຕີແລະສະມາຊິກລັດຖະບານ,ບັນດາທ່ານເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນພ້ອມດ້ວຍຜູ້ຕາງໜ້າສະພາແຫ່ງຊາດ (ສພຊ), ອົງການຈັດຕັ້ງພັກ-ລັດທຽບເທົ່າກະຊວງ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, 3 ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ; ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາຮັບຮອງເອົາບັນດາຫົວຂໍ້ສຳຄັນ ຄື:

ວາລະທີ 1. ກອງປະຊຸມໄດ້ພິຈາລະນາເຫັນດີດ້ານຫຼັກການຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະ 6 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2025 ຂອງລັດຖະບານ ຄື:

1. ການຜັນຂະຫຍາຍ ແລະ ປະຕິບັດ 12 ວຽກ ໃນມະຕິ 10 ຂອງຄະນະບໍລິຫານງານສູນກາງພັກສະໄໝທີXI;ແຜນການຜັນຂະຫຍາຍບັນດາມະຕິຂອງກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ IX ທີ່ພົວພັນກັບລັດຖະບານ, ການແກ້ໄຂບັນຫາທີ່ສັງຄົມສະເໜີ ແລະ 10 ບັນຫາທີ່ ສພຊ ສັງລວມ.

2. ລາຍງານສະພາບພາກພື້ນ-ສາກົນ ແລະ ຄາດຄະເນຜົນກະທົບຕໍ່ປະເທດເຮົາ ທັງສະເໜີມາດຕະການຮັບມືຕໍ່ຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ວຽກງານຊາຍແດນ (ການສ້າງຕັ້ງ ຫຼື ຍົກລະດັບດ່ານຊາຍແດນ).

3. ລາຍງານສະພາບພົ້ນເດັ່ນວຽກງານປ້ອງກັນຊາດ (ປກຊ) ແລະ ວຽກງານກໍ່ສ້າງຮາກຖານການເມືອງ.

4. ລາຍງານສະພາບພົ້ນເດັ່ນວຽກງານປ້ອງກັນຄວາມສະຫງົບ (ປກສ) ແລະ ສະເໜີທິດທາງແກ້ໄຂໃນ 6 ເດືອນທ້າຍປີ.

ຕໍ່ການສະຫຼຸບວຽກງານ 6 ເດືອນຕົ້ນປີ 2025 ຂອງລັດຖະບານ: ເຖິງແມ່ນວ່າສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປຢ່າງສະຫຼັບຊັບຊ້ອນ ໂດຍສະເພາະບັນຫາຂໍ້ຂັດແຍ້ງຕ່າງໆ, ການແຜ່ລະບາດຂອງພະຍາດ, ບັນດາຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ ທີ່ສົ່ງຜົນກະທົບຕໍ່ການຟື້ນຕົວ ແລະ ຂະຫຍາຍຕົວຂອງເສດຖະກິດໂລກເວົ້າລວມ, ເວົ້າສະເພາະຢູ່ພາຍໃນປະເທດ ກໍ່ເກີດມີໄພທຳມະຊາດນໍ້າຖ້ວມ ແລະ ນໍ້າປ່າໄຫຼຊຸ ເຮັດໃຫ້ມີຜູ້ເສຍຊີວິດຢູ່ບາງແຂວງບວກກັບຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍບາງດ້ານ ສົ່ງຜົນກະທົບຕໍ່ການຟື້ນຕົວ ແລະ ຂະຫຍາຍຕົວຂອງເສດຖະກິດ-ສັງຄົມ. ແຕ່ດ້ວຍຄວາມພະຍາຍາມ, ເອົາໃຈໃສ່ນຳພາ-ຊີ້ນຳຂອງກົມການເມືອງສູນກາງພັກ ແລະ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ສາມາດເຮັດໃຫ້ທົ່ວປະເທດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບແລະເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວໃນລະດັບ 4.5%, ສາມາດເກັບລາຍຮັບງົບປະມານໄດ້ 37,758 ຕື້ກີບ ເທົ່າກັບ 55% ຂອງແຜນການປີ, ແຜນລາຍຈ່າຍປະຕິບັດໄດ້ 28,223 ຕື້ກີບ ເທົ່າກັບ 39% ຂອງແຜນການປີ ໂດຍໄດ້ສຸມໃສ່ລາຍຈ່າຍທີ່ເປັນບຸລິມະສິດ ເປັນຕົ້ນ ການເບີກຈ່າຍເງິນເດືອນ, ເງິນອຸດໜູນຄ່າຄອງຊີບ ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ຜູ້ເສຍອົງຄະ ທັງປະຕິບັດເງິນອຸດໜູນຕໍ່ຄູອາສາສະໝັກ ແລະ ເງິນເດືອນຂັ້ນຕໍ່າຂອງພະນັກງານ-ລັດຖະກອນ, ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ຕາມສັນຍາ; ອັດຕາເງິນເຟີ້ຫຼຸດລົງເປັນແຕ່ລະເດືອນ ສະເລ່ຍ 6 ເດືອນຕົ້ນປີ ຢູ່ໃນລະດັບ 11%, ຄາດວ່າໝົດປີ ອັດຕາເງິນເຟີ້ຈະຢູ່ໃນລະດັບບໍ່ເກີນ 1 ຕົວເລກ; ຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າ 4.9 ເດືອນ ເຊິ່ງທ້າຍປີ 2025 ຄາດວ່າຈະສາມາດກຸ້ມການນຳເຂົ້າບໍ່ຫຼຸດ 5 ເດືອນ; ໄດ້ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ ເຮັດໃຫ້ລາຄາສິນຄ້າເໜັງຕີງບໍ່ຫຼາຍ ເຊິ່ງມີທ່າອຽງດີຂຶ້ນ, ພ້ອມກັນນັ້ນ ກໍໄດ້ກະກຽມປະ

ອ່ານຕໍ່ໜ້າ 7

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 6)

ຕິບັດໂຄງການສ້າງສາງນໍ້າມັນເຊື້ອໄຟ; ໄດ້ຊຸກຍູ້ສົ່ງເສີມການຜະລິດເຂົ້ານາແຊງ ສາມາດປະຕິບັດໄດ້ໃນເນື້ອທີ່ 84,700 ກວ່າເຮັກຕາ, ຜົນຜະລິດໄດ້ 423,800 ກວ່າໂຕນ ເທົ່າກັບ 94% ຂອງແຜນການປີ ນອກນັ້ນ, ຍັງສົ່ງເສີມການຜະລິດກະສິກຳສົ່ງອອກເປັນສິນຄ້າ ທົດແທນການນຳເຂົ້າ ເປັນຕົ້ນ ພືດຜັກ, ໝາກໄມ້, ປາ, ສັດໃຫຍ່ ແລະ ອື່ນໆ ໂດຍສາມາດສົ່ງສິນຄ້າກະສິກຳ-ປ່າໄມ້ບັນລຸ1,120 ລ້ານກວ່າໂດລາ ເທົ່າກັບ 75% ຂອງແຜນການປີ; ໄດ້ສຸມໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາໂຄງການແຮ່ທາດທີ່ໄດ້ອະນຸມັດຜ່ານມາ ໂດຍໄດ້ອອກຄຳສັ່ງສະບັບເລກທີ 06/ນຍ ທັງປະຕິບັດມາດຕະການໂຈະການພິຈາລະນາໂຄງການໃໝ່ຕາມແຈ້ງການສະບັບເລກທີ 1090/ຫສນຍ ສຳລັບແຮ່ໂລຫະທາດ ຢ່າງເຂັ້ມງວດແລະໄດ້ສືບຕໍ່ສຸມໃສ່ກວດກາໂຄງການແຮ່ຄຳ, ແຮ່ຫາຍາກ ແລະແຮ່ທາດອື່ນໆທີ່ໄດ້ຮັບອະນຸຍາດຜ່ານມາ ແລະ ປະຕິບັດມາດຕະການເຂັ້ມງວດ, ເດັດຂາດຕໍ່ໂຄງການທີ່ລະເມີດສັນຍາ,ສ້າງຜົນກະທົບບໍ່ດີຕໍ່ສິ່ງແວດລ້ອມ-ສັງຄົມ ລວມທັງໂຄງການທີ່ລາຍງານຂໍ້ມູນຜົນການຜະລິດບໍ່ຖືກກັບຄວາມເປັນຈິງ ເຊິ່ງເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວນັບມື້ມີຄວາມເຂັ້ມງວດ ແລະ ເດັດຂາດຫຼາຍຂຶ້ນ; ໄດ້ແກ້ໄຂຍານພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງ ແລະ ຄຸ້ມຄອງລົດລັດ ຕາມດຳລັດ 599/ລບ ແລະ ຂໍ້ຕົກລົງ 169/ນຍ ມີຄວາມຄືບໜ້າເປັນກ້າວໆ; ໄດ້ຄົ້ນຄວ້າ ແລະ ສະເໜີທິດທາງປັບປຸງການປະຕິຮູບລັດວິສາຫະກິດຈຳນວນໜຶ່ງ ເຊິ່ງກົມການເມືອງສູນກາງພັກ ໄດ້ຕົກລົງເຫັນດີດ້ານຫຼັກການແລ້ວ; ໄດ້ສຸມໃສ່ແກ້ໄຂສະພາບຂາດແຄນໄຟຟ້າ ແລະ ໄດ້ເລັ່ງຊຸກຍູ້ໂຄງການແຫຼ່ງຜະລິດທີ່ຈັດໃນບຸລິມະສິດ; ໄດ້ສຸມໃສ່ປະຕິບັດໂຄງການປັບປຸງ ແລະຍົກລະດັບພື້ນຖານໂຄງລ່າງດ້ານຄົມມະນາຄົມ ແລະ ຂົນສົ່ງ ເພື່ອເຊື່ອມຈອດ-ເຊື່ອມໂຍງຢູ່ພາຍໃນປະເທດ, ກັບພາກພື້ນ ແລະສາກົນ ທັງອຳນວຍຄວາມສະດວກແລະຫຼຸດຕົ້ນທຶນການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ ເປັນຕົ້ນ ເສັ້ນທາງສີໄຄ-ໂພນໂຮງ, ເສັ້ນທາງເລກທີ 13 ໃຕ້, ຂົວຂ້າມນໍ້າຂອງ ຫ້ວຍແກ້ວ-ກ້ອນຕືນ ແຂວງບໍ່ແກ້ວ ສຳເລັດ98%,ຂົວຂ້າມນໍ້າຂອງປາກຊັນ-ບຶງການສຳເລັດ97%, ຂົວ 12 ແຫ່ງ ຕາມເສັ້ນທາງຈຳປາສັກ-ສາລະວັນສຳເລັດ61%; ໄດ້ຊຸກຍູ້ໂຄງການກໍ່ສ້າງທາງດ່ວນທີ່ໄດ້ເຊັນMOUຜ່ານມາ ເປັນຕົ້ນ ທາງດ່ວນ ລາວ-ຈີນ (ແຕ່ແຂວງອຸດົມໄຊ-ຊາຍແດນບໍ່ເຕ່ນ), ທາງດ່ວນ ວຽງຈັນ-ຮ່າໂນ້ຍ, ທາງລົດໄຟ ວຽງຈັນ-ທ່າແຂກ-ຫວງອ່າງ ນອກນັ້ນ, ກຳລັງເລັ່ງສ້າງແຜນປັບປຸງ-ກໍ່ສ້າງເສັ້ນທາງ ແລະ ຂົວ ເປັນຕົ້ນ ເສັ້ນທາງເລກທີ 13 ເໜືອ, ຂົວຂ້າມນໍ້າຂອງ ຊຽງແມນ-ຫຼວງພະບາງ, ຂົວມິດຕະພາບ ລາວ-ໄທ ແຫ່ງທີ 6 ສາລະວັນ-ອຸບົນຣາດຊະທານີ ແລະ ທາງຫຼວງທ້ອງຖິ່ນອື່ນໆຕື່ມອີກ; ສາມາດຂຶ້ນທະບຽນອອກໃບຕາດິນໄດ້ 76,900 ກວ່າຕອນ ເທົ່າກັບ 26%ຂອງແຜນການປີ; ໄດ້ສືບຕໍ່ສຸມໃສ່ແກ້ໄຂສະພາບຂາດຄູສອນໂດຍສຸມໃສ່ປະຕິບັດຕາມນະໂຍບາຍ ແລະ ມາດຕະການທີ່ລັດຖະບານໄດ້ກຳນົດໃນມະຕິ 09/ລບ ເປັນຕົ້ນ ໄດ້ເພີ່ມເງິນເບ້ຍລ້ຽງໃຫ້ນັກສຶກສາທີ່ຮຽນສາຍຄູ, ການກຳນົດໂກຕາຄູສອນໃຫ້ສອດຄ່ອງກັບແຜນກໍ່ສ້າງຄູ, ຫັນຄູອາສາສະໝັກເຂົ້າເປັນລັດຖະກອນຄູ ແລະ ການທົດແທນຄູທີ່ສູນເສຍດ້ວຍຮູບການຕ່າງໆ ທັງປະຕິບັດນະໂຍບາຍເອົາຄູອາສາສະໝັກ ເຂົ້າບັນຈຸເປັນທະຫານພັນທະ ແຕ່ປະຕິບັດໜ້າທີ່ຄູສອນ; ໄດ້ສຸມໃສ່ປັບປຸງ ແລະຍົກລະດັບຕາໜ່າງການບໍລິການສາທາລະນະສຸກໃນທົ່ວປະເທດ ໂດຍກໍ່ສ້າງຍົກລະດັບພື້ນຖານໂຄງລ່າງ ແລະ ພັດທະນາບຸກຄະລາກອນທາງການແພດ ທັງຢູ່ສູນກາງ ແລະທ້ອງຖິ່ນ; ໄດ້ສຸມໃສ່ປັບປຸງກົງຈັກການຈັດຕັ້ງຕາມມະຕິຂອງສູນກາງພັກ ເລກທີ 03/ຄບສພ ແລະ ມະຕິຂອງສະພາແຫ່ງຊາດ ເລກທີ 05/ສພຊ ເຊິ່ງຂັ້ນສູນກາງແມ່ນສຳເລັດໂດຍພື້ນຖານ ແລະ ກຳລັງສືບຕໍ່ໃນຂັ້ນທ້ອງຖິ່ນ; ໄດ້ເອົາໃຈໃສ່ເພີ່ມທະວີການຮ່ວມມືກັບບັນດາປະເທດເພື່ອນມິດ ແລະຄູ່ຮ່ວມພັດທະນາ ໂດຍເປັນເຈົ້າການເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດຂອບການຮ່ວມມືຕ່າງໆຂອງສາກົນ ເຊິ່ງໄດ້ນຳເອົາຜົນປະໂຫຍດ ແລະ ໝາກຜົນສຳເລັດຕົວຈິງມາໃຫ້ປະເທດຫຼາຍຂຶ້ນ ທັງສາມາດເຮັດໃຫ້ບົດບາດແລະອິດທິພົນຂອງລາວ ໃນເວທີພາກພື້ນ ແລະ ສາກົນ ສູງເດັ່ນຂຶ້ນ.

ສຳລັບທິດທາງແຜນວຽກຈຸດສຸມໃນໄລຍະ6 ເດືອນທ້າຍປີ 2025, ກອງປະຊຸມໄດ້ຊີ້ນຳຂະແໜງການ ແລະ ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ບັນດາວຽກງານສຳຄັນດັ່ງນີ້:

1.ສືບຕໍ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ສຸມໃສ່ລົງກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕິດພັນວຽກງານ 3 ສ້າງ ໃຫ້ເຂັ້ມແຂງ; ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆທາງສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງ; ສ້າງແຜນປ້ອງກັນຮັກສາຄວາມສະຫງົບ ແລະ ປອດໄພ ໃຫ້ແກ່ການຈັດງານສຳຄັນຂອງຊາດ ເປັນຕົ້ນ ໄລຍະສະເຫຼີມສະຫຼອງວັນສະຖາປານາ ສປປລາວ ຄົບຮອບ50ປີ, ງານມະຫະກຳກິລາແຫ່ງຊາດ, ກອງປະຊຸມໃຫຍ່ 3 ຂັ້ນ ແລະ ອື່ນໆ.

2. ສືບຕໍ່ປັບປຸງກົງຈັກການຈັດຕັ້ງຕາມມະຕິຂອງຄະນະບໍລິຫານງານສູນກາງພັກ ເລກທີ 03/ຄບສພ ແລະ ມະຕິຂອງສະພາແຫ່ງຊາດ ເລກທີ 05/ສພຊ ໃນໜ້າວຽກທີ່ຍັງບໍ່ທັນສຳເລັດໃຫ້ຖືກຕ້ອງໂປ່ງໃສ ແລະ ຮັບປະກັນຄວາມສະຫງົບ ໃນນັ້ນ, ໃຫ້ສຸມໃສ່ຮ່າງດຳລັດວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ທັງກຳນົດຕຳແໜ່ງງານ ແລະ ສັບຊ້ອນຈັດວາງພະນັກງານຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ໄດ້ປັບປຸງກົງຈັກຄືນໃໝ່ນັ້ນໃຫ້ສຳເລັດຕາມແຜນກຳນົດ;ພ້ອມນີ້, ກໍສືບຕໍ່ກະກຽມດຳເນີນກອງປະຊຸມໃຫຍ່ຂອງບັນດາອົງຄະນະພັກກະຊວງ,ອົງການແລະທ້ອງຖິ່ນ ເພື່ອກ້າວເຂົ້າສູ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ.

3. ກະກຽມສະເຫຼີມສະຫຼອງວັນສຳຄັນທາງປະຫວັດສາດ: ວັນສະຖາປະນາ ສປປລາວ ຄົບຮອບ 50 ປີ ແລະ ວັນວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ໃຫ້ບັນລຸໄດ້ຈຸດປະສົງລະດັບຄາດໝາຍ ບົນຈິດໃຈປະຢັດມັດທະຍັດ ທັງໃຫ້ມີເນື້ອໃນແລະເປັນຂະບວນຟົດຟື້ນ; ຖືເອົາໂອກາດນີ້ປຸກລະດົມຈິດໃຈຮັກຊາດ, ຮັກລະບອບໃໝ່ ໃຫ້ສູງຂຶ້ນ, ໃນນີ້: ເອົາໃຈໃສ່ການຈັດຕັ້ງປາຖະກະຖາມູນເຊື້ອການປະຕິວັດພາຍໃຕ້ການນຳພາຂອງພັກ; ການຂຽນບົດຕ່າງໆ ທີ່ມີເນື້ອໃນສັນລະເສີນມູນເຊື້ອອັນດີງາມຂອງພັກແລະລັດຖະບານ; ການສະແດງສິລະປະວັນນະຄະດີ; ການແຂ່ງຂັນກິລາຕ່າງໆ; ຈັດຕັ້ງພົບປະພະນັກງານອາວຸໂສປະຕິວັດ; ຈັດຕັ້ງສວນສະໜາມຂອງກຳລັງປະກອບອາວຸດ, ບັນດາຂະແໜງການ, ຂົງເຂດວຽກງານ ແລະ ອື່ນໆ.

4.ສືບຕໍ່ສຸມໃສ່ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຕາມແຜນວຽກຂອງຄະນະສະເພາະກິດ 19/ກມສພ ໃນນີ້, ສຸມໃສ່ການຊຳລະໜີ້ສິນຕ່າງປະເທດໃຫ້ທັນຕາມກຳນົດ, ການຜະລິດເປັນສິນຄ້າທົດແທນການນຳເຂົ້າ ແລະ ສົ່ງອອກ, ຄົ້ນຄວ້າມາດຕະການຮັບມືຕໍ່ກັບສະພາບຄວາມສ່ຽງດ້ານນໍ້າມັນເຊື້ອໄຟໃນຕໍ່ໜ້າ.

5. ສຸມໃສ່ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ IX (2021-2025) ແລະ ແຜນການປະຈຳປີ 2025 ຕິດພັນກັບການສະຫຼຸບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ສືບຕໍ່ຮ່າງແຜນ 5 ປີ ຄັ້ງທີ X (2026-2030)ແລະແຜນການປະຈຳປີ 2026 ໃຫ້ມີເນື້ອໃນຄົບຖ້ວນສົມບູນ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX.

6. ສືບຕໍ່ຄົ້ນຄວ້າການປະຕິບັດມາດຕະການຕົວຈິງຕາມທິດຊີ້ນຳຂອງກົມການເມືອງ ແລະ ກອງປະຊຸມລັດຖະບານເປີດກວ້າງຄັ້ງນີ້ ເພື່ອແກ້ໄຂບັນດາເປົ້າໝາຍທີ່ໄດ້ຮັບຜົນກະທົບຈາກການປັບໂຄງສ້າງລາຄາໄຟຟ້າ ເປັນຕົ້ນ ສຸມໃສ່ການເຈລະຈາລາຄາຊື້-ຂາຍໄຟຟ້າກັບຜູ້ພັດທະນາເຂື່ອນ ແລະຮີບຮ້ອນຫັນຮູບແບບການຈົດນັບຕົວເລກນຳໃຊ້ໄຟຟ້າ ແລະ ຈ່າຍຄ່າໄຟຟ້າເປັນທັນສະໄໝແລະອື່ນໆ;ພ້ອມນີ້, ໃຫ້ພາກສ່ວນກ່ຽວຂ້ອງເອົາໃຈໃສ່ກ່ຽວກັບການໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຄວາມພະຍາຍາມຂອງລັດຖະບານໃນການແກ້ໄຂບັນຫາດັ່ງກ່າວ ໂດຍຫັນປ່ຽນໃໝ່ວິທີການໂຄສະນາເຜີຍແຜ່ໃຫ້ເຂົ້າໃຈງ່າຍ ແລະ ທົ່ວເຖິງ.

7. ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດຄຳສັ່ງເລກທີ 06/ນຍ ກ່ຽວກັບການແກ້ໄຂບັນຫາການລັກລອບຂຸດຄົ້ນແຮ່ທາດຕ່າງໆ ດ້ວຍຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຂອງທຸກພາກສ່ວນທຸກຂັ້ນ; ແກ້ໄຂບັນຫາພາຫະນະນຳເຂົ້າບໍ່ຖືກຕ້ອງໃຫ້ຂາດຕົວ; ສະກັດກັ້ນການຄ້ານອກລະບົບ, ການລັກລອບນຳເຂົ້າສິນຄ້າຟຸມເຟືອຍ, ສົ່ງເສີມສິນຄ້າທີ່ຜະລິດໄດ້ພາຍໃນ.

8. ສືບຕໍ່ສຸມໃສ່ຊຸກຍູ້ບັນດາໂຄງການກໍ່ສ້າງເສັ້ນທາງທີ່ສຳຄັນບຸລິມະສິດ, ເສັ້ນທາງເປ່ເພຈາກໄພພິບັດ; ສຸມໃສ່ປັບປຸງບູລະນະແລະສ້ອມແປງເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນໃນຂອບເຂດທົ່ວປະເທດ ໃຫ້ສອດຄ່ອງກັບມະຕິຂອງສະພາແຫ່ງຊາດ ວ່າດ້ວຍນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່ ສະບັບເລກທີ 165/ສພຊ.

9. ເອົາໃຈໃສ່ຕິດຕາມ ແລະ ເຝົ້າລະວັງບັນຫາໄພພິບັດທີ່ອາດຈະເກີດຂຶ້ນໃນລະດູຝົນ ລວມເຖິງກະກຽມແຜນຮັບມື-ແຜນຟື້ນຟູຮີບດ່ວນຫຼັງໄພພິບັດ, ບໍລິຫານຈັດການບັນດາອ່າງເກັບນໍ້າຢູ່ແຕ່ລະເຂື່ອນໄຟຟ້າໃຫ້ດີ.

10. ສືບຕໍ່ສຸມໃສ່ແກ້ໄຂບັນຫາເຄັ່ງຮ້ອນທາງສັງຄົມ ເປັນຕົ້ນການຂາດແຄນຄູສອນໂດຍຮີບຮ້ອນຄົ້ນຄວ້າໂກຕາຄູ ປີ 2025 ໃຫ້ຫຼາຍຂຶ້ນ; ແກ້ໄຂການປະລະການຮຽນ, ບັນຫາການຄຸ້ມຄອງແຮງງານ, ການຂາດແຄນແຮງງານ, ການແກ້ໄຂບັນຫາທີ່ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ໃນນີ້, ໃຫ້ສຸມໃສ່ຄົ້ນຄວ້າປັບປຸງເງິນເດືອນແລະເງິນນະໂຍບາຍຕ່າງໆ ເພື່ອໃຫ້ໄດ້ເລີ່ມປະຕິບັດໃນປີ 2026 ຕາມການຊີ້ນຳຂອງກົມການເມືອງສູນກາງພັກ.

11. ສືບຕໍ່ຕິດຕາມສະພາບການສາກົນ ແລະ ພາກພື້ນຢ່າງໃກ້ຊິດ, ກະກຽມໃຫ້ແກ່ການນຳຂັ້ນສູງຂອງພັກ-ລັດ ເດີນທາງໄປເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ຕ່າງປະເທດ ທັງຜັນຂະຫຍາຍຜົນການໄປຢ້ຽມຢາມ ແລະ ເຮັດວຽກດັ່ງກ່າວ.

ສຳລັບບົດລາຍງານ: ການຜັນຂະຫຍາຍ ແລະປະຕິບັດ 12 ວຽກ ໃນມະຕິ 10 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI; ແຜນການຜັນຂະຫຍາຍບັນດາມະຕິຂອງກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ຊຸດທີ IX ທີ່ພົວພັນກັບລັດຖະບານ, ການແກ້ໄຂບັນຫາທີ່ສັງຄົມສະເໜີ ແລະ 10 ບັນຫາທີ່ ສພຊ ສັງລວມ; ລາຍງານສະພາບພາກພື້ນ-ສາກົນ ແລະຄາດຄະເນຜົນກະທົບຕໍ່ປະເທດເຮົາ ທັງສະເໜີມາດຕະການຮັບມືຕໍ່ຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ວຽກງານຊາຍແດນ (ການສ້າງຕັ້ງ ຫຼື ຍົກລະດັບດ່ານຊາຍແດນ); ລາຍງານສະພາບພົ້ນເດັ່ນວຽກງານ ປກຊແລະວຽກງານກໍ່ສ້າງຮາກຖານການເມືອງ; ລາຍງານສະພາບພົ້ນເດັ່ນວຽກງານ ປກສ ແລະ ສະເໜີທິດທາງແກ້ໄຂ ໃນ 6 ເດືອນທ້າຍປີ. ກອງປະຊຸມຊີ້ນຳໃຫ້ຂະແໜງການກ່ຽວຂ້ອງປັບປຸງຄືນຕາມການປະກອບຄຳເຫັນຂອງຜູ້ເຂົ້າຮ່ວມ.

ວາລະທີ 2. ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາການລາຍງານກ່ຽວກັບ: 1) ຜົນການທົບທວນຄືນການປັບຂຶ້ນລາຄາໄຟຟ້າ ແລະ ສະເໜີທິດທາງແກ້ໄຂໃນຕໍ່ໜ້າ; 2) ການຮັບມືແລະທິດທາງແກ້ໄຂການຂຶ້ນພາສີຂອງສະຫະລັດອາເມລິກາ ຕໍ່ ສປປລາວ 40%; 3) ສະພາບການຄຸ້ມຄອງລາຄາສິນຄ້າ ລວມທັງລາຄານໍ້າມັນເຊື້ອໄຟ, ການສົ່ງອອກສິນຄ້າລະດູຝົນ, ການປະຕິບັດກອງທຶນສົ່ງເສີມການຜະລິດສິນຄ້າຢູ່ ສປປລາວ.

ວາລະທີ 3. ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາການລາຍງານແຜນ ແລະ ບັນຊີໂຄງການກໍ່ສ້າງ ແລະ ປັບປຸງເສັ້ນທາງທີ່ເປັນບຸລິມະສິດ ໃນປີ 2026 ແລະ ປີຕໍ່ໆໄປ ລວມທັງກົນໄກການປະຕິບັດກອງທຶນທາງ.

**(ກົມປະຊາສຳພັນ, ຫສນຍ)**





## ປະທານ...

(ຕໍ່ຈາກໜ້າ 1)

ລະກິດ 2025.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້ ເຊິ່ງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ແລະ ສອງອົງການນິຕິບັນຍັດ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທໍາຍິ່ງໆຂຶ້ນ. ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດເບລາຣຸດຊີ ໄດ້ມີການພົວພັນຮ່ວມມືທີ່ດີນໍາກັນມາໂດຍຕະຫຼອດ ເຊິ່ງສະແດງອອກ: ສອງປະທານສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນເບລາຣຸດຊີ ໄດ້ພົບປະແບບທາງໄກນໍາກັນ, ມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ, ແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນໃນໂອກາດວັນສໍາຄັນຕ່າງໆຂອງ 2 ປະເທດ; ນອກຈາກນີ້, ສອງຝ່າຍຍັງຮ່ວມມື, ສະໜັບສະໜູນ ແລະຊ່ວຍເຫຼືອເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນເວທີ AIPA, ASEP, IPU ແລະ ອົງການອື່ນໆ. ພິເສດ, ໃນປີ2024 ທີ່ຜ່ານມາ, ທ່ານ ອີກໍ ເຊີເກເຢັນໂກ (Igor Sergeenko) ປະທານສະພາຜູ້ແທນປະຊາຊົນເບລາຣຸດຊີພ້ອມດ້ວຍຄະນະກໍໄດ້ເດີນທາງມາຢ້ຽມຢາມຢ່າງເປັນທາງການແລະຮ່ວມກັນລົງນາມບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນເບລາຣຸດຊີໃນໂອກາດທີ່ເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ທີ່ສະພາແຫ່ງຊາດລາວເປັນເຈົ້າພາບ, ພ້ອມທັງເຂົ້າຮ່ວມກອງປະຊຸມພົບປະກັບບັນດາສະມາຊິກລັດຖະສະພາຈາກປະເທດອາຊຽນໃນນາມປະເທດສັງເກດການ.

ສະພາແຫ່ງຊາດລາວ ຍາມໃດກໍໃຫ້ຄວາມສໍາຄັນໃນການປະກອບສ່ວນຊຸກຍູ້, ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງສອງປະເທດ ລາວ-ເບລາຣຸດຊີ ດ້ວຍການປະຕິບັດຕາມພາລະບົດບາດຂອງຕົນ ເປັນຕົ້ນສະໜັບສະໜູນດ້ານນິຕິກໍາ, ການຊຸກຍູ້ແລະຕິດຕາມການຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາ ແລະຂໍ້ຕົກລົງທີ່ໄດ້ລົງນາມຮ່ວມກັນໃຫ້ແຕກດອກອອກຜົນແລະນໍາເອົາຜົນປະໂຫຍດມາສູ່ປະຊາຊົນທັງສອງຊາດ; ສືບຕໍ່ໃຫ້ການຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນການເຄື່ອນໄຫວວຽກງານການຕ່າງປະເທດໃນພາກພື້ນ ແລະ ສາກົນ.

ທ່ານ ມັກຊິມ ຣີເຊັນໂກຟ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນແລະແຈ້ງຜົນສໍາເລັດການພົບປະເຮັດວຽກລະຫວ່າງສອງລັດຖະມົນຕີກະຊວງການຕ່າງປະເທດ ເບລາຣຸດຊີ-ລາວ ທີ່ໄດ້ພ້ອມກັນຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງກະຊວງ ກໍຄືການພົວພັນຮ່ວມມືຂອງສອງປະເທດນັບຕັ້ງແຕ່ໄດ້ສ້າງຕັ້ງສາຍພົວພັນການທູດນໍາກັນ ໃນວັນທີ7 ກຸມພາ1994, ແລກປ່ຽນຄໍາຄິດຄໍາເຫັນກ່ຽວກັບສະພາບການພາກພື້ນ-ສາກົນ ແລະ ພ້ອມກັນປຶກສາຫາລືທິດທາງແຜນການຮ່ວມມືໃນຕໍ່ໜ້າ; ພ້ອມທັງແຈ້ງສະພາບການທີ່ພົ້ນເດັ່ນຂອງເບລາຣຸດຊີ ໃຫ້ຊາບອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ນະ ທີ່ປະກອບດ້ວຍຮອງປະທານກໍາມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ເຄື່ອນໄຫວຢ້ຽມຢາມ ແລະເຮັດວຽກຢູ່ແຂວງຄໍາມ່ວນ.

ທ່ານຮອງປະທານສະພາແຫ່ງຊາດ ແລະ ຄະນະ ໄດ້ພົບປະທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ຮອງເຈົ້າແຂວງໆຄໍາມ່ວນ ເຊິ່ງໄດ້ແຈ້ງຈຸດປະສົງຂອງການມາເຄື່ອນໄຫວໃນຄັ້ງນີ້, ຫຼັງຈາກນັ້ນ, ໄດ້ພົບປະກັບທ່ານ ບຸນມີ ພົມມະສອນ ປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາການນໍາຂອງບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ.

ທ່ານຮອງເຈົ້າແຂວງ, ປະທານສະພາປະຊາຊົນແຂວງ ແລະ ພະແນກການຕ່າງໆ ໄດ້ລາຍງານສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງ, ການເຄື່ອນໄຫວທີ່ພົ້ນເດັ່ນໃນປີ 2024-2025 ໂດຍສະເພາະແມ່ນການດໍາເນີນກອງປະຊຸມໃຫຍ່ 3 ຂັ້ນໃນຂັ້ນເມືອງ; ການເຄື່ອນໄຫວຕາມ 3 ພາລະບົດບາດຂອງສະພາປະຊາຊົນແຂວງ; ການນໍາຂອງພະແນກແຜນການ ແລະການລົງທຶນ, ພະແນກການຕ່າງປະເທດ, ພະແນກການເງິນ, 2 ກອງບັນຊາການ ປກຊ-ປກສ ໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂອງຕົນໃຫ້ຄະນະຊາບ ທັງຍົກໃຫ້ເຫັນດ້ານດີ, ຂໍ້ສະດວກພ້ອມຂໍ້ຫຍຸ້ງຍາກແລະມີຂໍ້ສະເໜີຈໍານວນໜຶ່ງ.

ໃນການພົບປະກັບການນໍາຂອງແຂວງ, ສະພາປະຊາຊົນແຂວງແລະພະແນກການຕ່າງໆນັ້ນ; ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສໍາເລັດ ແລະ ຜົນງານດ້ານຕ່າງໆ ໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ຕະຫຼອດໄລຍະຜ່ານມາ, ຊົມເຊີຍຜົນການຈັດຕັ້ງປະຕິບັດກອງປະຊຸມໃຫຍ່ 3 ຂັ້ນ ເຊິ່ງປັດຈຸບັນຂັ້ນເມືອງໄດ້ສໍາເລັດແລ້ວ ແລະ ສືບຕໍ່ກະກຽມກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງໃນຕໍ່ໜ້າ. ທ່ານຮອງປະທານສະພາແຫ່ງຊາດຍັງໄດ້ເນັ້ນໜັກໃຫ້ການນໍາຂອງແຂວງ ຈົ່ງໄດ້ສືບຕໍ່ນໍາພາຊີ້ນໍາການພັດທະນາເສດຖະກິດ-ສັງຄົມຂອງແຂວງ, ນໍາໃຊ້ທ່າແຮງບົ່ມຊ້ອນຂອງແຂວງໃຫ້ມີປະສິດທິຜົນ, ປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ແຂວງແລະປະເທດຊາດ ລວມທັງການເຊື່ອມຈອດດ້ານຄົມມະນາຄົມ (ພື້ນຖານໂຄງລ່າງ) ແລະການນໍາໃຊ້ການຊ່ວຍເຫຼືອຂອງຕ່າງປະເທດຢ່າງມີປະສິດທິຜົນ; ສືບຕໍ່ແຂ່ງຂັນກັນສ້າງຜົນງານ 2 ວັນປະຫວັດສາດຂອງພວກເຮົາ (ຄົບຮອບ 50 ປີ ສ້າງຕັ້ງ ສປປລາວ ແລະ ຄົບຮອບ 105 ປີ ວັນເກີດປະທານ ໄກສອນ ພົມວິຫານ) ໄປຄຽງຄູ່ກັບການເປີດກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ; ການກະກຽມໃຫ້ແກ່ການເລືອກຕັ້ງ ແມ່ນສະເໜີໃຫ້ມີການຄົ້ນຄວ້າ, ກະກຽມບຸກຄະລາກອນລົງສະໝັກຮັບເລືອກຕັ້ງ ໂດຍສະເພາະກໍານົດໃຫ້ໄດ້ສັດສ່ວນເພດຍິງ ເຊິ່ງຄາດໝາຍໃນສະພາແຫ່ງຊາດ ຊຸດທີ X ຈະໃຫ້ໄດ້ 30% ຂຶ້ນໄປ.

ການເຄື່ອນໄຫວວຽກງານຄັ້ງນີ້, ຍັງໄດ້ໄປຢ້ຽມຢາມ ແລະ ເຮັດວຽກກັບເຈົ້າໜ້າທີ່ປະຈໍາດ່ານທ້ອງຖິ່ນດ່ານທ່າເຮືອເມືອງທ່າແຂກ, ດ່ານສາກົນຂົວມິດຕະພາບ 3, ຢ້ຽມຢາມໂຮງຮຽນມັດທະຍົມວິຊາຊີບຕົວແບບ ລາວ-ຫວຽດນາມ ຢູ່ເມືອງໜອງບົກ ພ້ອມທັງໄດ້ມອບອຸປະກອນການສຶກສາ ແລະ ກິລາຈໍານວນໜຶ່ງ ໃຫ້ນ້ອງນັກຮຽນ, ຢ້ຽມຢາມ ແລະ ເຮັດວຽກຢູ່ບໍລິສັດຝຸ່ນໂປຕາສ ອາຊີ-ໂປຕາສ (ລາວ) ຈໍາກັດຜູ້ດຽວ, ຢ້ຽມຢາມ ແລະ ເຮັດວຽກກັບເຈົ້າໜ້າທີ່ປະຈໍາດ່ານສາກົນນາເຜົ້າເມືອງບົວລະພາ, ຢ້ຽມຢາມ ແລະ ເຮັດວຽກຢູ່ບໍລິສັດ ລາວຄາຍຢວນ ບໍ່ແຮ່ຈໍາກັດຜູ້ດຽວ ເພື່ອຊອກຮູ້ສະພາບການຕົວຈິງໃນການເຄື່ອນໄຫວຂອງບັນດາພາກສ່ວນທີ່ກ່ຽວຂ້ອງ ທັງຂອງແຂວງ ແລະ ນັກລົງທຶນຕ່າງປະເທດ.

**(ກົງທະນູຄໍາ ພິພັດເສລີ)**






# ເຂົ້າພັນສາ ເຂົ້າຫາທໍາ

**# ດັນກົບເມກ**

ເລື່ອງເຂົ້າພັນສາ ເຖິງຈະແມ່ນໜ້າທີ່ທາງວິໄນໂດຍກົງຂອງພະສົງແຕ່ພວກເຮົາຄົນລາວຊາວພຸດ ກໍບໍ່ຄວນຄິດງ່າຍຖືເບົາວ່າ ໃນຖານະພຸດທະສາສະນິກະຊົນຈະບໍ່ເຮັດຫຍັງຫຼືສຶກສາຫຼັກສິນທໍານໍາໄປປະຕິບັດເພື່ອໃຫ້ຊີວິດຈະເລີນກ້າວໜ້າ ດີກວ່າເປັນຊາວພຸດພຽງແຕ່ຂຽນບອກໄວ້ໃນສໍາມະໂນຄົວ, ຜ່ານມາແຕ່ລະປີ ຜູ້ຂຽນໄດ້ຂຽນອະທິບາຍໄວ້ພໍສົມຄວນແລ້ວ; ດັ່ງນັ້ນ, ພັນສາປີນີ້ ຈຶ່ງຢາກເນັ້ນເລື່ອງການສຶກສາຫຼັກທໍາມະ ແລ້ວນໍາໄປປະຕິບັດໃຫ້ເປັນມຸງຄຸນແກ່ຊີວິດໃນລະດູການເຂົ້າພັນສາ 3 ເດືອນ.

ເຂົ້າພັນສາ ບໍ່ພຽງແຕ່ຄູບາດອກ, ຄົນບູຮານເຄີຍເວົ້າວ່າ: ສັດບາງປະເພດ ມັນກໍຈໍາສິນຄືກັນ; ດັ່ງນັ້ນ, ຜູ້ຂຽນຈຶ່ງເນັ້ນມາຫາຊາວພຸດວ່າ: ເຮົາຕັ້ງໃຈຈະງົດເວັ້ນຫຍັງແດ່? ຫຼັກທໍາມະສໍາລັບລະດູເຂົ້າພັນສາຊື່ວ່າ: ວິຣັດ ໝາຍເຖິງການງົດເວັ້ນຈາກບາບ ຄືອະບາຍຍະມຸກຕ່າງໆ ເພື່ອໃຫ້ຊີວິດຂອງເຮົາພົບຄວາມສຸກ, ຫຼັກທໍາມະທີ່ເອີ້ນວ່າ ວິຣັດ ມີ 3 ປະການຄື: 1. ສໍາປັດຕະວິຣັດ ຄືການຫຼີກເວັ້ນຈາກບາບຄວາມຊົ່ວ ແລະ ອະບາຍຍະມຸກຕ່າງໆ ເພາະຕ້ອງມີຄວາມລະອາຍ ແລະ ຢ້ານກົວຕໍ່ບາບ ເຊັ່ນ ເລີກເວັ້ນຈາກການດື່ມສຸລາຢາເມົາ; 2. ສະມາທານວິຣັດ ຄືການຫຼີກເວັ້ນຈາກບາບຄວາມຊົ່ວຕ່າງໆ ແລະ ອະບາຍຍະມຸກດ້ວຍການສະມາທານສິນ 5 ຫຼື ສິນ 8 ຕ່າງໆ ອົດທົນຕໍ່ສິ່ງຍົວະຍຸພາຍນອກ, ເຂັ້ມງວດປະຕິບັດສິນ; 3. ສະມຸດເສດວິຣັດ ຄືການພະຍາຍາມຫຼີກເວັ້ນເດັດຂາດ ຈາກອະບາຍຍະມຸກ ແລະ ຄວາມຊົ່ວຕ່າງໆຢ່າງຖາວອນແຕ່ລະຂັ້ນ.

ຂໍສະຫຼຸບສັ້ນໆວ່າ: ບຸນເຂົ້າພັນສາສໍາລັບຊາວພຸດ ເຮົາຄວນສຶກສາທໍາມະ ແລະ ນໍາເອົາທໍາມະໄປປະຕິບັດໃຫ້ເກີດມຸງຄຸນແກ່ຊີວິດຂອງຕົນ ດີກວ່າຊອກແຕ່ບ່ອນຍົກຈອກຫາແຕ່ແນວປະໝາດຂາດສະຕິແກ່ຕົນເອງ ເປັນຊາວພຸດຕ້ອງຄຽງຄູ່ກັບການປະຕິບັດ!

ຂໍສະເໜີເປັນຂໍ້ຄິດ.



## ສຸຂະພາບທາງໂຣກ

# ໝາກມອນໜ່ວຍນ້ອຍ ແຕ່ປະໂຫຍດຫຼາຍກວ່າທີ່ຄິດ

# ຮຽບຮຽງໂດຍ: ທິວກະທິ



ໝາກມອນເປັນໝາກໄມ້ທີ່ມີປະໂຫຍດຕໍ່ສຸຂະພາບ ເພາະເປັນໝາກໄມ້ທີ່ໃຫ້ພະລັງງານຕ່ຳ ທັງມີສານອາຫານທີ່ສຳຄັນເຊັ່ນ: ຄາໂບໄຮເດດ ແລະ ເສັ້ນໄຍທີ່ເຮັດໃຫ້ອີ່ມໄວ ນອກນີ້, ຍັງຊ່ວຍເພີ່ມພະລັງງານໃຫ້ຮ່າງກາຍອີກດ້ວຍ ນອກນັ້ນ, ຍັງຖືກຈັດເປັນໝາກໄມ້ທີ່ມີນ້ຳຫຼາຍ ເພາະ 88% ຂອງໝາກມອນແມ່ນນ້ຳ ຈຶ່ງສາມາດຊ່ວຍເພີ່ມລະດັບນ້ຳໃນຮ່າງກາຍແລະຊ່ວຍປ້ອງກັນການຂາດນ້ຳໄດ້.

ໝາກມອນຍັງອຸດົມໄປດ້ວຍວິຕາມິນ ແລະ ແຮ່ທາດທີ່ສຳຄັນເຊັ່ນ: ວິຕາມິນຊີ, ວິຕາມິນອີ, ວິຕາມິນເຄ1, ທາດເຫຼັກ, ໂພແທດຊຽມແລະຍັງເປັນແຫຼ່ງຂອງສານຕ້ານອະນຸມູນອິດສະຫຼະທີ່ມີປະໂຫຍດ ເຊັ່ນ: ແອນໂທໄຊຍານິນ (Anthocyanin), ໄຊຍານິດິນ (Cyanidin), ເມຣິເຊຕິນ (Myricetin), ອາຊິດໂຄໂລຈີນິກ (Chlorogenic Acid), ລູທິນ (Rutin) ເຊິ່ງສານຕ້ານອະນຸມູນອິດສະຫຼະເຫຼົ່ານີ້ແມ່ນດີຕໍ່ລະບົບພູມຕ້ານທານແລະປ້ອງກັນຈຸລັງໃນຮ່າງກາຍຈາກການຖືກທຳລາຍໂດຍສານອະນຸມູນອິດສະຫຼະ.

ປະໂຫຍດຂອງໝາກມອນ

1. ຫຼຸດຜ່ອນຄວາມສ່ຽງຂອງມະເຮັງ

ສານຕ້ານອະນຸມູນອິດສະຫຼະ ເປັນສານອາຫານສຳຄັນທີ່ຊ່ວຍໃຫ້ລະບົບພູມຕ້ານທານໃນຮ່າງກາຍແຂງແຮງ ຊ່ວຍກະຕຸ້ນການເຮັດວຽກຂອງເຊວແລະປ້ອງກັນຈຸລັງຕ່າງໆໃນຮ່າງກາຍຈາກສານອະນຸມູນອິດສະຫຼະທີ່ບໍ່ດີຍິ່ງໄປກວ່ານັ້ນສານຕ້ານອະນຸມູນອິດສະຫຼະຍັງຊ່ວຍປ້ອງກັນບໍ່ໃຫ້ຈຸລັງມະເຮັງຂະຫຍາຍຕົວ ຫຼືຫຼຸດໂອກາດການເປັນມະເຮັງ.

2. ດີຕໍ່ກັບການຫຼຸດນ້ຳໜັກ

ໝາກມອນມີເສັ້ນໃຍຫຼາຍ ແລະ ແຄລໍຣີຕ່ຳ ຈຶ່ງເໝາະສົມສຳລັບຜູ້ທີ່ຢູ່ໃນໄລຍະຫຼຸດນ້ຳໜັກ ຫຼື ຄວບຄຸມອາຫານ ເສັ້ນໄຍຈະເຮັດໃຫ້ຮູ້ສຶກອີ່ມດົນ, ບໍ່ຫິວເລື້ອຍໆ ແລະ ບໍ່ເຮັດໃຫ້ແຄລໍລີ່ສູງຂຶ້ນ ເພາະວ່າມີແຄລໍລີຕ່ຳ ຈຶ່ງສາມາດຈຳກັດ ຫຼື ຄວບຄຸມພະລັງງານປະຈຳວັນໄດ້.

3. ດີຕໍ່ສຸຂະພາບຕັບ

ຕັບເປັນອະໄວຍະວະທີ່ມີຄວາມສຳຄັນຫຼາຍໃນຮ່າງກາຍ ເພາະເຮັດໜ້າທີ່ໃນການກັ່ນຕອງສານພິດຕ່າງໆ ແລະ ທຳລາຍໄຂມັນ ທັງປ້ອງກັນບໍ່ໃຫ້ເລືອດກ້າມເຊິ່ງສານຕ້ານອະນຸມູນອິດສະຫຼະໃນໝາກມອນຖືວ່າດີຫຼາຍສຳລັບຕັບ ເພາະມັນຊ່ວຍລ້າງສານພິດໃນຕັບ ທັງຍັງຊ່ວຍປ້ອງກັນໄຂມັນຈາກການສະສົມໃນຕັບ ເຊິ່ງເປັນໜຶ່ງໃນສາເຫດຂອງພະຍາດໄຂມັນຫຸ້ມຕັບ.

4. ປັບລະດັບນ້ຳຕານໃນເລືອດໃຫ້ຄົງທີ່

ລະດັບນ້ຳຕານໃນເລືອດສູງ ສາມາດເພີ່ມຄວາມສ່ຽງຕໍ່ການເປັນພະຍາດຫົວໃຈ ແລະ ພະຍາດເບົາຫວານເພື່ອປ້ອງກັນຄວາມສ່ຽງຂອງພະຍາດຊຳເຮື້ອເຫຼົ່ານີ້ ການໃຫ້ຄວາມສຳຄັນຕໍ່ກັບການກິນອາຫານເປັນສິ່ງທີ່ບໍ່ຄວນເບິ່ງຂ້າມ ໂດຍສະເພາະໝາກມອນ ເຊິ່ງເປັນໝາກໄມ້ທີ່ມີເສັ້ນໃຍຫຼາຍ ຖ້າກິນເປັນປະຈຳຈະຊ່ວຍໃຫ້ການດູດຊຶມຂອງນ້ຳຕານໃນກະແສເລືອດຊ້າລົງ ດັ່ງນັ້ນ, ຈຶ່ງຊ່ວຍປ້ອງກັນບໍ່ໃຫ້ລະດັບນ້ຳຕານໃນເລືອດສູງຂຶ້ນ.

5. ທາດເຫຼັກຫຼາຍ

ເຖິງວ່າທາດເຫຼັກສ່ວນຫຼາຍຈະມີຢູ່ໃນຊີ້ນ ຫຼື ເຄື່ອງໃນສັດ ແຕ່ໝາກໄມ້ກໍອຸດົມດ້ວຍທາດເຫຼັກເຊັ່ນດຽວກັນ ໂດຍສະເພາະແມ່ນໝາກມອນ ມີປະລິມານທາດເຫຼັກຫຼາຍເຖິງ 2,6 ມິລິກຼາມ (ຕໍ່ໝາກມອນໜຶ່ງໜ່ວຍ) ເທົ່າກັບ 14% ຂອງປະລິມານທາດເຫຼັກທີ່ຮ່າງກາຍຄວນໄດ້ຮັບໃນແຕ່ລະມື້.

ທາດເຫຼັກມີປະໂຫຍດໃນການຊ່ວຍເກັບຮັກສາ ແລະ ການຂົນສົ່ງອົກຊີແຊນ ໄປສູ່ສ່ວນຕ່າງໆຂອງຮ່າງກາຍ, ປ້ອງກັນບໍ່ໃຫ້ຮ່າງກາຍເກີດອາການຂາດອົກຊີແຊນ ແລະ ຊ່ວຍກະຕຸ້ນການເຕີບໃຫຍ່ຂອງເມັດເລືອດຂາວ ເຊິ່ງດີຕໍ່ລະບົບພູມຕ້ານທານຂອງຮ່າງກາຍ ແລະ ຊ່ວຍປ້ອງກັນອາການແຊກຊ້ອນລະຫວ່າງການຖືພານຳອີກ.

www.sanook.com

## ອາດ ກະວີລາວ

# ມ່ວນແທ້ບ້ານມາ

# ສົມຊາຍ ແກ້ວບົວລະພາ

❈ ສຸກໃດ ຈະທຽບເທົ່າ
ຢູ່ບ້ານນາດົງດອນ
ສັກກຸນາແຊວຮ້ອງ
ໃນບ່ອນຂົງເຂດບ້ານ

❈ ສຸກກາຍໃຈອຸ່ນເອົ້າ
ເຂດປ່າເຂົາພົງໄພ
ລາຕີເດືອນດາວແຈ້ງ
ມອງລ່ຳຊົມສ່ອງສົ້ງ

❈ ຍາມເມື່ອລົມພັດໄມ້
ທັງດອກດວງມາລາ
ພະໄນສຸກຫຼາຍລົ້ນ
ຕ້ານເອກາຕ່ອຍເນື້ອ

❈ ສົມດັ່ງຄຳເພີ່ນເວົ້າ
ພາພະໄນໄຫຼຫຼົງ
ຍາມເມື່ອເຮົາທຽວດັ້ນ
ສັກກູນາໂຮ່ຮ້ອງ

❈ ສຸກຢູ່ໃນຖິ່ນນີ້
ກິນປິ່ນກັບປູປາ
ຣົດຊາດແຊບເຫຼືອລົ້ນ
ບ້ານນາສຸກມ່ວນແມ້ງ ຍາມແລງເລາະເຂດບ້ານ

ເນົາຖິ່ນດິນສະຖານ
ປ່າຟອຍເຟືອງຫຍ້າ
ເນືອງນອງຕອມໄຕ່
ສະຖານກ້ຳຖິ່ນເຮົາ

ອາຍກິ່ນພູມລຳເນົາ
ຖິ່ນໃດຈະທຽມເທົ້າ
ເຍືອງແຍງປະກາຍສ່ອງ
ຫຼົງແລ້ວສະຫງ່າງາມ

ໃບກ່ອງເອນໄກວ
ສະຫງ່າປິວປາຍພົ້ນ
ລົມວົນພັດຜ່ານ
ມະໂນຊ້ອຍຊື່ນຊວງ

ສະຫວັນຖິ່ນດິນນາ
ມ່ວນໃນມະໂນເນື້ອ
ພູມລຳເນົາແດນປ່າ
ກັງວານກ້ອງກ່ອມຫູ

ຫາໃສປຽບບໍ່ມີເໝືອນ
ແຈ່ວໝາກເຂືອເອາະຕົ້ມ
ສົມຄຳຄົນຊ່າ
ສະຖານກ້ຳເກີດຕົນ ມ່ວນເດ!



## ຜ່ອນຄາຍ ສະບາຍ

## (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❈ **ຕາມ**ຂ່າວລາຍງານໃຫ້ຮູ້ວ່າ: ກາງເດືອນນີ້ ມີ**ພາຍຸວິພາພັດຜ່ານ**ເຂດພາກເໜືອຂອງລາວ ເຮັດໃຫ້ມີນ້ຳປ່າໄຫຼຖ້ວມບ້ານເຮືອນປະຊາຊົນ ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍ **ພີ່ນ້ອງເອີຍ!** ຂໍໃຫ້ມີສະຕິຕັ້ງ ພົ້ນຜ່ານອຸປະສັກ ຝາກກຳລັງແຮງໃຈ ຍື່ນຍໍຍັງກ້າ ເຖິງບ້ານອງໄຫຼຖ້ວມ ທາງທຽວເພຊາດ ຄົນຮ່ວມຊາດບໍ່ແລ້ງ ໄມຕີຊ້ວານຊ່ອຍເຫຼືອ **ຊອບແລ້ວ!**

❈ **ເດືອນສິງຫາ** ເຫັນວ່າມີຫຼາຍເຫດການສຳຄັນທີ່ເປັນວັນປະຫວັດສາດຂອງຊາດ ເຊິ່ງມີ**ວັນສື່ມວນຊົນແຫ່ງຊາດ, ວັນປະກາດໃຊ້ລັດຖະທຳມະນູນ** ແລະ **ວັນສ້າງຕັ້ງແນວລາວສ້າງຊາດ** ປະຊາລາວຄຶກຄື້ນ ຊົມຊື່ນຍິນດີ ມີກິດຈະກຳປາຖະກະຖາ ເລົ່າຄືນມູນເຊື້ອ ເພື່ອໃຫ້ທອນເຫັນແລ້ງ ກຳລັງແຮງເມື່ອກ່ອນ ສອນໃຫ້ຄົນຮຸ່ນນ້ອຍ ຮຽນຮູ້ສືບສານ **ຊອບແລ້ວ!**

## ຊອບຍິ້ມ

# ພົ້ງລຶ່ງ

## ເລື່ອງ: ຢ່າມາຕົວະ

ຍິງຄົນໜຶ່ງ ໄປຢ້ຽມຢາມຜູ້ເປັນຜົວຢູ່ຄຸກ, ກ່ອນຊິກັບ, ລາວໄດ້ເຂົ້າໄປຫາຕ່ຳຫຼວດຜູ້ເຝົ້າຄຸກ ພ້ອມທັງເວົ້າວ່າ:

"ເຈົ້າບໍ່ຄວນໃຊ້ວຽກລາວໜັກຫຼາຍ, ເບິ່ງດູ ລາວຊົງອິດເມື່ອຍ ຈົນຈ່ອຍຜອມລົງເລີຍ"

ຕ່ຳຫຼວດໄດ້ຍິນ ແລ້ວກໍຫົວຂຶ້ນ ພ້ອມຕອບກັບໄປວ່າ:

"ພວກຂ້ອຍຊິໄດ້ໃຊ້ແຮງງານຫຍັງລາວ, ແຕ່ລະມື້ ກະມີແຕ່ກິນລະກະນອນ ສຳນັ້ນ"

ຍິງສາວຈຶ່ງຕອບກັບຢ່າງໄວວ່າ:

"ຢ່າມາຕົວະ... ລາວເວົ້າໃຫ້ຟັງຢູ່ ວ່າລາວຂຸດຮູມາເປັນເດືອນແລ້ວ"



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ຂອງກິນ ບໍ່ກິນມັນເບົ່າ
ຂອງເກົ່າ ບໍ່ເລົ່າມັນລືມ

ລັດຖະສະພາຕ່າງປະເທດ

# ປະທານາທິບໍດີອີຣານລົງນາມໃນກົດໝາຍໂຈະການຮ່ວມມືກັບ IAEA



ສື່ມວນຊົນຂອງລັດອີຣານ ລາຍງານເມື່ອວັນພຸດທີ 2 ກໍລະກົດຜ່ານມາວ່າ ປະທານາທິບໍດີອີຣານ ມາຊູດ ເປເຊຊຄຽນ (Masoud Pezeshkian) ໄດ້ລົງນາມໃນຮ່າງກົດໝາຍໂຈະການຮ່ວມມືກັບສຳນັກງານພະລັງງານປະລະມານູສາກົນ (International Atomic Energy Agency - IAEA) ອົງການກວດການິວເຄລຍຂອງສະຫະປະຊາຊາດ (ສປຊ). ນີ້ແມ່ນໜຶ່ງໃນບັນດາບາດກ້າວທີ່ຮຸນແຮງທີ່ສຸດ ທີ່ອີຣານໄດ້ດຳເນີນໃນການປະເຊີນໜ້າກັບບັນດາມະຫາອຳນາດສາກົນ ກ່ຽວກັບກິດຈະກຳນິວເຄລຍຂອງຕົນ.

ສະຖານີໂທລະພາບແຫ່ງລັດອີຣານລາຍງານວ່າ, ມາຊູດ ເປເຊຊຄຽນ ໄດ້ໃຫ້ສັດຕະຍາບັນຕໍ່ຮ່າງກົດໝາຍໂຈະການຮ່ວມມືກັບIAEA; ໂທລະພາບ Press TV, ສຳນັກຂ່າວ Mehr ແລະ Tasnim ເຊິ່ງເປັນສຳນັກຂ່າວເຄິ່ງທາງການ ລາຍງານວ່າ ກົດໝາຍສະບັບນີ້ ເຊິ່ງເກີດຂຶ້ນຫຼັງຈາກການປະທະກັນທາງທະຫານກັບອິດສະຣາແອນ ແລະ ສະຫະລັດອາເມລິກາເມື່ອບໍ່ດົນມານີ້ ໄດ້ມີຜົນບັງຄັບໃຊ້ຢ່າງເປັນທາງການ.

ການໂຈະນີ້ ມີຂຶ້ນຫຼັງຈາກສະພາທີ່ປຶກສາອິດສະລາມ (Islamic Consultative Assembly) ຫຼື ລັດຖະສະພາຂອງອີຣານ ໄດ້ຮັບຮອງເອົາກົດໝາຍດັ່ງກ່າວຢ່າງຖ້ວມລົ້ນດ້ວຍຄະແນນເຫັນດີ 221 ສຽງ, ງົດອອກສຽງ 1 ສຽງ ແລະ ບໍ່ມີສຽງຄັດຄ້ານຈາກສະມາຊິກສະພາທັງໝົດ290ທີ່ນັ່ງ; ຈາກນັ້ນ, ການລົງຄະແນນສຽງຂອງລັດຖະສະພາໄດ້ຮັບການອະນຸມັດຈາກສະພາລັດຖະທຳມະນູນຂອງອີຣານ ກ່ອນທີ່ຈະໄປຮອດໂຕະເຮັດວຽກຂອງປະທານາທິບໍດີ.

ການກະທຳດັ່ງກ່າວເກີດຂຶ້ນຫຼັງຈາກຄວາມເຄັ່ງຕຶງທີ່ເລີ່ມຕັ້ງແຕ່ວັນສຸກທີ 13 ມິຖຸນາ ເມື່ອອິດສະຣາແອນຖິ້ມລະເບີດໃສ່ຖານທັບ ແລະ ໂຮງງານນິວເຄລຍຂອງອີຣານ; ອີຣານຕອບໂຕ້ດ້ວຍການໂຈມຕີດ້ວຍລູກສອນໄຟ ແລະ ເຮືອບິນບໍ່ມີຄົນຂັບ ຕໍ່ເປົ້າໝາຍຂອງອິດສະຣາແອນ; ສະຫະລັດຕອບໂຕ້ດ້ວຍການໂຈມຕີໂຮງງານນິວເຄລຍສຳຄັນຂອງອີຣານທີ່ຟໍໂດ (Fordow), ນາຕັນຊ໌ (Natanz) ແລະ ອິສຟາຮານ (Isfahan) ເມື່ອວັນທີ21 ມິຖຸນາ; ໃນການຕອບໂຕ້, ອີຣານໄດ້ໂຈມຕີຖານທັບອາກາດ ອັລ ອູເດດ (Al Udeid) ຂອງສະຫະລັດ ໃນປະເທດກາຕາ ດ້ວຍລູກສອນໄຟ ເມື່ອວັນຈັນທີ 23 ມິຖຸນາ. ອີຣານກ່າວປະນາມການໂຈມຕີຂອງສະຫະລັດ ວ່າເປັນ "ການໂຈມຕີຢ່າງປ່າເຖື່ອນ" ແລະ ປະຕິຍານວ່າຈະບໍ່ປະຖິ້ມໂຄງການນິວເຄລຍຂອງຕົນ. ສົງຄາມ12 ວັນ ໃນທີ່ສຸດກໍສິ້ນສຸດລົງພາຍໃຕ້ຂໍ້ຕົກລົງຢຸດຍິງທີ່ສະຫະລັດອຳນວຍຄວາມສະດວກເຊິ່ງເລີ່ມມີຜົນບັງຄັບໃຊ້ເມື່ອວັນທີ 24 ມິຖຸນາຜ່ານມາ.

ບັນດາເຈົ້າໜ້າທີ່ອີຣານກ່າວຫາວ່າ IAEA ມີດ່ຽງບຕະຫຼອດປະຕິບັດການທາງທະຫານ, ເຮັດໃຫ້ຄວາມເຄັ່ງຕຶງລະຫວ່າງອີຣານກັບສຳນັກງານນິວເຄລຍຂອງ ສປຊ ກ່ຽວກັບການເຂົ້າເຖິງ ແລະ ຄວາມໂປ່ງໃສ ຍິ່ງເພີ່ມສູງຂຶ້ນ. ຜົນກະທົບຕໍ່ຄວາມສາມາດຂອງ IAEA ໃນການຕິດຕາມໂຄງການນິວເຄລຍຂອງອີຣານ ແມ່ນບໍ່ມີຄວາມແນ່ນອນ, ແຕ່ເປັນການຍົກລະດັບທ່າທີດ້ານນິວເຄລຍຂອງອີຣານຢ່າງຈະແຈ້ງ ທ່າມກາງຄວາມເຄັ່ງຕຶງໃນພາກພື້ນທີ່ເພີ່ມສູງຂຶ້ນ.

# Ethiopia ຜ່ານກົດໝາຍອະນຸຍາດໃຫ້ຄົນຕ່າງປະເທດເປັນເຈົ້າຂອງເຮືອນ



(Xinhua) - ສະພາຜູ້ແທນປະຊາຊົນ ເຊິ່ງເປັນສະພາຕໍ່າຂອງລັດຖະສະພາ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ສະຫະພັນ ເອທິໂອປີ ໄດ້ຮັບຮອງເອົາກົດໝາຍອະນຸຍາດໃຫ້ຄົນຕ່າງປະເທດເປັນເຈົ້າຂອງຊັບສິນໃນປະເທດ.

ພາຍໃຕ້ກົດໝາຍສະບັບກ່ອນໜ້າ, ຊາວຕ່າງຊາດບໍ່ໄດ້ຮັບອະນຸຍາດໃຫ້ເປັນເຈົ້າຂອງເຮືອນໃນເອທິໂອປີ.

ກົດໝາຍສະບັບໃໝ່ທີ່ໄດ້ຮັບການອະນຸມັດເມື່ອວັນອັງຄານທີ 2 ກໍລະກົດຜ່ານມານີ້ປະກອບດ້ວຍຂໍ້ກຳນົດລາຍລະອຽດຈຳນວນຫຼາຍ, ໜຶ່ງໃນນັ້ນຄືບຸກຄົນທີ່ບໍ່ແມ່ນພົນລະເມືອງເອທິໂອປີ ຕ້ອງຈັດສັນຢ່າງໜ້ອຍ 150,000 ໂດລາສະຫະລັດ ເພື່ອເປັນເຈົ້າຂອງຊັບສິນທີ່ຢູ່ອາໄສໃນເອທິໂອປີ.

ຄາດວ່ານະໂຍບາຍໃໝ່ນີ້ ຈະຊ່ວຍເພີ່ມກະແສການລົງທຶນ, ສົ່ງເສີມການພັດທະນາຂະແໜງອະສັງຫາລິມະຊັບ ແລະ ສ້າງໂອກາດການຈ້າງງານທີ່ຫຼາກຫຼາຍໃຫ້ແກ່ປະເທດໃນອາຟຼິກາຕາເວັນອອກແຫ່ງນີ້.

# ປິດກອງປະຊຸມຄະນະປະຈຳ NPC ສະໄໝທີ 16



(Xinhua) - ວັນສຸກທີ 27 ມິຖຸນາຜ່ານມາ, ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (National People's Congress-NPC) ຊຸດທີ XIV ໄດ້ປິດກອງປະຊຸມສະໄໝທີ 16 ໂດຍການເປັນປະທານຂອງທ່ານ ຈ້າວ ເລີ້ຈີ້ ປະທານຄະນະປະຈຳ NPC; ບັນດາສະມາຊິກສະພາໄດ້ລົງຄະແນນສຽງຮັບຮອງເອົາກົດໝາຍການລົງໂທດສຳລັບການບໍລິຫານປ້ອງກັນຄວາມສະຫງົບ (ປັບປຸງ) ແລະ ກົດໝາຍຕ້ານການແຂ່ງຂັນທີ່ບໍ່ຍຸຕິທຳ (ປັບປຸງ).

ທ່ານ ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງຂອງປະທານປະເທດ 2 ສະບັບ ເພື່ອປະກາດໃຊ້ 2 ກົດໝາຍດັ່ງກ່າວ.

ກອງປະຊຸມໄດ້ຮັບຮອງເອົາມະຕິຂອງຄະນະປະຈຳ NPC ກ່ຽວກັບການໃຫ້ສັດຕະຍາບັນສົນທິສັນຍາວ່າດ້ວຍການສ້າງຕັ້ງອົງການໄກ່ເກ່ຍສາກົນ; ນອກນີ້, ຍັງໄດ້ອະນຸມັດບັນຊີຂັ້ນສຸດທ້າຍຂອງລັດຖະບານສຳລັບປີ2024.

ກອງປະຊຸມໄດ້ລົງຄະແນນສຽງປົດ ໝຽວ ຮວາ (Miao Hua) ອອກຈາກຕຳແໜ່ງສະມາຊິກຄະນະກຳມະການທະຫານສູນກາງ; ຂະນະດຽວກັນ, ຍັງໄດ້ຜ່ານຮ່າງບົດລາຍງານຄຸນສົມບັດຂອງຜູ້ແທນ ແລະ ຮ່າງກົດໝາຍອື່ນໆທີ່ກ່ຽວຂ້ອງກັບບຸກຄະລາກອນ.

ໃນການກ່າວຄຳເຫັນປິດກອງປະຊຸມ, ທ່ານ ຈ້າວ ໄດ້ເນັ້ນໜັກເຖິງຄວາມຈຳເປັນຕ້ອງດຳເນີນວຽກງານໂຄສະນາສຶກສາຢ່າງຕັ້ງໜ້າກ່ຽວກັບການປະຕິບັດ "ມະຕິ 8 ຂໍ້" ຂອງການນຳສູນກາງພັກ ກ່ຽວກັບການປັບປຸງການເຄື່ອນໄຫວວຽກງານ ເພື່ອສົ່ງເສີມການພັດທະນາວຽກງານຂອງສະພາຜູ້ແທນປະຊາຊົນໃຫ້ມີຄຸນນະພາບສູງ; ທ່ານຍັງຮຽກຮ້ອງໃຫ້ພະຍາຍາມປະຕິບັດຕາມລະບອບປະຊາທິປະໄຕທົ່ວປວງຊົນ, ຮັບເອົາການຕິດຕາມກວດກາຂອງປະຊາຊົນຢ່າງມີສະຕິ ແລະ ຮັກສາສາຍພົວພັນອັນໃກ້ຊິດກັບປະຊາຊົນ.

ທ່ານກ່າວວ່າ, ບັນດາສະມາຊິກສະພາ ຄວນສ້າງຄວາມຮັບຮູ້ກ່ຽວກັບການປົກຄອງລັດດ້ວຍກົດໝາຍຢ່າງເຂັ້ມແຂງ, ຮັກສາຄວາມຈົງຮັກພັກດີຕໍ່ລັດຖະທຳມະນູນ, ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດແລະປະຕິບັດໜ້າທີ່ຕາມກົດໝາຍຂອງຕົນຢ່າງຊື່ສັດ.

# ສ.ເກົາຫຼີ ປັບປຸງເນື້ອໃນກົດໄອຍະການເສິກ, ຫ້າມທະຫານ-ຕຳຫຼວດ ເຂົ້າສະພາໂດຍບໍ່ໄດ້ຮັບອະນຸຍາດ



(AFP) - ວັນພະຫັດທີ 3 ກໍລະກົດຜ່ານມາ, ສະພາແຫ່ງຊາດຂອງ ສ.ເກົາຫຼີ ໄດ້ລົງຄະແນນສຽງຮັບຮອງເອົາການປັບປຸງເນື້ອໃນບາງຂໍ້ກຳນົດຂອງກົດໄອຍະການເສິກ ເຊິ່ງລະບຸຢ່າງຈະແຈ້ງວ່າ ຫ້າມຂັດຂວາງສະມາຊິກສະພາແຫ່ງຊາດ ເຂົ້າໄປໃນສະພາແຫ່ງຊາດ ແລະ ຫ້າມທະຫານ ແລະ ຕຳຫຼວດ ເຂົ້າໄປໃນສະພາແຫ່ງຊາດ ໂດຍບໍ່ໄດ້ຮັບການອະນຸຍາດຈາກປະທານສະພາແຫ່ງຊາດ.

ການປັບປຸງດັ່ງກ່າວ ເປັນຜົນມາຈາກການປະກາດໃຊ້ກົດໄອຍະການເສິກ ລະຫວ່າງວັນທີ 4-5 ທັນວາ 2024 ໂດຍປະທານາທິບໍດີ ຢຸນ ຊອກ-ຢອນ (Yoon Suk-yeol) ຜູ້ນຳ ສ.ເກົາຫຼີ ໃນເວລານັ້ນ ໄດ້ໃຊ້ອຳນາດດັ່ງກ່າວເປັນເວລາປະມານ 6 ຊົ່ວໂມງ, ແຕ່ເຮັດໃຫ້ເກີດຄວາມວຸ້ນວາຍໃນທຸກພາກສ່ວນຂອງສັງຄົມຈົນເຖິງທຸກວັນນີ້ ແລະນຳໄປສູ່ການປົດຢຸນອອກຈາກຕຳແໜ່ງໂດຍຜ່ານຂະບວນການສະພາແຫ່ງຊາດ ທີ່ໄດ້ຮັບການຮັບຮອງຈາກສານລັດຖະທຳມະນູນ; ປັດຈຸບັນ, ອະດີດຜູ້ນຳ ສ.ເກົາຫຼີ ກາຍເປັນຈຳເລີຍໃນຂໍ້ກ່າວຫາກໍ່ການກະບົດ ຈາກການໃຊ້ອຳນາດໃນເລື່ອງນີ້.

# Azerbaijan ອະນຸມັດຄາສີໂນ, ຍົກເລີກຂໍ້ຫ້າມການພະນັນທີ່ຍາວນານຫຼາຍສິບປີ



(Xinhua)-ວັນອັງຄານທີ 8 ກໍລະກົດຜ່ານມາ, ສະພາແຫ່ງຊາດຂອງອາແຊກໄບຊານ ໄດ້ອະນຸມັດກົດໝາຍອະນຸຍາດໃຫ້ຕັ້ງຄາສີໂນຢູ່ເກາະທຽມໃນທະເລແຄສປຽນ (Caspian) ຂອງປະເທດ, ຍົກເລີກຂໍ້ຫ້າມການພະນັນທີ່ແກ່ຍາວເປັນເວລາຫຼາຍທົດສະວັດ.

ຮ່າງກົດໝາຍດັ່ງກ່າວຜ່ານການພິຈາລະນາຄັ້ງທີ3ໃນກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ, ໄດ້ກຳນົດຂອບທາງກົດໝາຍສຳລັບກິດຈະກຳຂອງຜູ້ດຳເນີນທຸລະກິດຢູ່ເກາະທຽມ,ລວມທັງການດຳເນີນງານຂອງຄາສີໂນ; ບັນດາສະມາຊິກສະພາແຫ່ງຊາດກ່າວວ່າ, ການປັບປຸງກົດໝາຍທີ່ມີຢູ່ແລ້ວ ມີຈຸດປະສົງເພື່ອດຶງດູດການລົງທຶນ ແລະ ຊຸກຍູ້ການພັດທະນາເສດຖະກິດຢູ່ເຂດນອກຝັ່ງທະເລ.

ການເຄື່ອນໄຫວດັ່ງກ່າວແມ່ນການຕໍ່ຍອດຈາກກົດໝາຍທີ່ໄດ້ຮັບການຮັບຮອງເອົາເມື່ອວັນທີ 7 ພຶດສະພາ 2024 ທີ່ໄດ້ກຳນົດກົດລະບຽບສຳລັບການກໍ່ສ້າງ ແລະ ການນຳໃຊ້ເກາະທຽມໃນທະເລແຄສປຽນ.

ພາຍໃຕ້ກົດໝາຍສະບັບໃໝ່, ການພະນັນຈະຍັງຖືກຫ້າມໃນທົ່ວອາແຊກໄບຊານ, ຍົກເວັ້ນຢູ່ເກາະທີ່ກຳນົດໄວ້ເປັນພິເສດເຫຼົ່ານີ້ ແລະ ຕ້ອງປະຕິບັດຕາມກົດລະບຽບຂອງປະເທດຢ່າງເຂັ້ມງວດເທົ່ານັ້ນ.

ການພະນັນຖືກຫ້າມໃນອາແຊກໄບຊານຕັ້ງແຕ່ປີ 1998.

# ສະພາແຫ່ງຊາດຫວຽດນາມ ຜ່ານກົດໝາຍທາງລົດໄຟ ແລະ ອະນຸມັດສ້າງຕັ້ງສູນການເງິນສາກົນ



(Xinhua) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດຫວຽດນາມຊຸດທີ XV ໄດ້ປິດລົງເມື່ອວັນສຸກທີ 27 ມິຖຸນາຜ່ານມາ; ໜຶ່ງໃນມະຕິທີ່ໄດ້ຮັບການຮັບຮອງເອົາແມ່ນການປັບປຸງລັດຖະທຳມະນູນ ເພື່ອປູທາງໄປສູ່ຮູບແບບການປົກຄອງທ້ອງຖິ່ນ 2 ຂັ້ນ, ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ1 ກໍລະກົດ 2025.

ໃນວັນດຽວກັນ, ສະພາແຫ່ງຊາດໄດ້ຜ່ານຮ່າງກົດໝາຍວ່າດ້ວຍທາງລົດໄຟສະບັບປັບປຸງ, ໂດຍສະເໜີບັນດາມາດຕະການຈູງໃຈເພື່ອສົ່ງເສີມການເຂົ້າຮ່ວມຂອງພາກເອກະຊົນໃນຂະແໜງການທາງລົດໄຟ; ພາຍໃຕ້ກົດໝາຍ, ອົງການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງກັບກິດຈະກຳທາງທຸລະກິດການລົດໄຟ ຈະມີສິດໄດ້ຮັບການຍົກເວັ້ນ ຫຼື ຫຼຸດຜ່ອນຄ່າທຳນຽມການນຳໃຊ້ທີ່ດິນ ແລະ ຄ່າເຊົ່າທີ່ດິນ ສຳລັບເຂດທີ່ກຳນົດໃຊ້ເປັນທາງລົດໄຟ, ພວກເຂົາຍັງຈະສາມາດເຂົ້າເຖິງສິນເຊື່ອການລົງທຶນຂອງລັດ ຫຼື ເງິນກູ້ຢືມທີ່ລັດຖະບານຄໍ້າປະກັນ ເມື່ອລົງທຶນໃນພື້ນຖານໂຄງລ່າງທາງລົດໄຟລະດັບຊາດ ຫຼື ທ້ອງຖິ່ນ.

ລັດຖະບານຈະໃຫ້ບຸລິມະສິດການຈັດສັນງົບປະມານໃນການພັດທະນາ, ຍົກລະດັບ, ບຳລຸງຮັກສາ ແລະ ປົກປັກຮັກສາພື້ນຖານໂຄງລ່າງທາງລົດໄຟ, ພ້ອມທັງການເຕີບໂຕຂອງອຸດສາຫະກຳລົດໄຟ.

ສະພາແຫ່ງຊາດ ຍັງໄດ້ຜ່ານມະຕິວ່າດ້ວຍການສ້າງຕັ້ງສູນກາງການເງິນສາກົນ ຢູ່ນະຄອນໂຮ່ຈິມິງທາງພາກໃຕ້ແລະນະຄອນດານັງ ທາງພາກກາງ.

ຫວຽດນາມ ຕັ້ງເປົ້າທີ່ຈະສ້າງສະພາບແວດລ້ອມທີ່ດຶງດູດສຳລັບການລົງທຶນດ້ານບໍລິການທາງການເງິນ ເພື່ອກະຕຸ້ນການໄຫຼວຽນຂອງເງິນທຶນ,ພັດທະນາຕະຫຼາດສຳຄັນ ແລະ ສ້າງຄວາມສາມາດດ້ານການເງິນທີ່ມີການແຂ່ງຂັນໃນທົ່ວໂລກ.

ສູນດັ່ງກ່າວ ຍັງຄາດວ່າຈະສົ່ງເສີມການເງິນສີຂຽວ ແລະ ລະດົມຊັບພະຍາກອນເພື່ອການຫັນເປັນພະລັງງານສີຂຽວ ເພື່ອສະໜັບສະໜູນການພັດທະນາແບບຍືນຍົງ.

ລັດຖະບານຈະສະເໜີສິ່ງຈູງໃຈພິເສດດ້ານພາສີ, ການແລກປ່ຽນເງິນຕາຕ່າງປະເທດ, ເຕັກໂນໂລຊີທາງການເງິນ (fintech), ແຮງງານ ແລະ ໂຄງສ້າງພື້ນຖານເພື່ອດຶງດູດນັກລົງທຶນຍຸດທະສາດ ແລະ ຜູ້ຊ່ຽວຊານດ້ານການເງິນສາກົນ.

# UNHCR ຊົມເຊີຍກົດໝາຍສະບັບໃໝ່ຂອງ Mali ທີ່ປົກປ້ອງຄົນບໍ່ມີສັນຊາດ



(Xinhua)-ສຳນັກງານຂ້າຫຼວງໃຫຍ່ຜູ້ລີ້ໄພຂອງສະຫະປະຊາຊາດ (The United Nations Refugee Agency-UNHCR) ໄດ້ສະແດງຄວາມຊົມເຊີຍຕໍ່ກົດໝາຍສະບັບໃໝ່ຂອງສາທາລະນະລັດມາລີ ທີ່ມີຈຸດປະສົງເພື່ອປົກປ້ອງສິດຂອງບຸກຄົນໄຮ້ລັດ ຫຼື ບໍ່ມີສັນຊາດ (stateless) ແລະຍົກລະດັບສະຖານະພາບຂອງພວກເຂົາ, ອີງຕາມຖະແຫຼງການທີ່ເຜີຍແຜ່ເມື່ອວັນຈັນທີ 30 ມິຖຸນາຜ່ານມາ.

ຈອດ ແພທຣິກ ເມນເຊ (Georges Patrick Menze) ຮັກສາການຜູ້ຕາງໜ້າ UNHCR ປະຈຳມາລີ ກ່າວວ່າ "ການປະກາດໃຊ້ກົດໝາຍສະບັບນີ້ເປັນບາດກ້າວທີ່ສຳຄັນໃນການປົກປ້ອງສິດທິມະນຸດໃນປະເທດມາລີ ແລະ ສະແດງໃຫ້ເຫັນຢ່າງຈະແຈ້ງເຖິງຄຳໝັ້ນສັນຍາຂອງລັດຖະບານໃນການຢຸດຕິພາວະບໍ່ມີສັນຊາດ, ມັນນຳຄວາມຫວັງມາສູ່ຫຼາຍພັນຄົນທີ່ມີຄວາມສ່ຽງ".

UNHCR ລະບຸວ່າ ກົດໝາຍສະບັບນີ້ ໄດ້ກຳນົດພາວະບໍ່ມີສັນຊາດ, ກຳນົດສິດ ແລະ ພັນທະຂອງບຸກຄົນທີ່ບໍ່ມີສັນຊາດ, ແລະ ສະເໜີແນວທາງແກ້ໄຂບັນຫາແບບຍືນຍົງ ເຊິ່ງກວມເອົາຜູ້ອົບພະຍົບທີ່ບໍ່ມີສັນຊາດ ແລະຜູ້ທີ່ເກີດໃນມາລີ ໂດຍຮັບປະກັນສິດສະເໝີພາບທາງດ້ານສຸຂະພາບ, ການສຶກສາ, ການຈ້າງງານ,ທີ່ຢູ່ອາໄສແລະຄວາມຍຸຕິທຳ ຄຽງຄູ່ກັບພົນລະເມືອງມາລີ.

ກົດໝາຍຍັງປົກປ້ອງບຸກຄົນທີ່ບໍ່ມີສັນຊາດຈາກການລົງໂທດຍ້ອນຂາດເອກະສານທາງກົດໝາຍ, ຫ້າມການຂັບໄລ່ຍົກເວັ້ນໃນບາງກໍລະນີ,ແລະອະນຸຍາດໃຫ້ບຸກຄົນເຫຼົ່ານີ້ ໄດ້ຮັບ ຫຼື ຢືນຢັນສັນຊາດມາລີ.

ຜູ້ຄົນຈຳນວນຫຼາຍໃນມາລີ ໂດຍສະເພາະກຸ່ມຊົນເຜົ່າພະເນຈອນ ຫຼື ບໍ່ມີທີ່ຢູ່ອາໄສຄົງທີ່ (nomadic), ຜູ້ລີ້ໄພ ແລະ ຊຸມຊົນເຂດຊາຍແດນຫ່າງໄກສອກຫຼີກ ຕ້ອງປະເຊີນກັບການເປັນຄົນບໍ່ມີສັນຊາດຍ້ອນຂາດເອກະສານພົນລະເຮືອນ ຫຼື ເອກະສານທາງແພ່ງ (civil documents).

ນັບແຕ່ປີ 2017 ເປັນຕົ້ນມາ ດ້ວຍການສະໜັບສະໜູນຂອງ UNHCR, ມາລີໄດ້ປ່ຽນສັນຊາດໃຫ້ແກ່ຜູ້ຄົນເກືອບ 2,400 ຄົນ ແລະ ໄດ້ມອບເອກະສານທາງແພ່ງໃຫ້ແກ່ຜູ້ຄົນຫຼາຍກວ່າ 30,000 ຄົນ.



## ຍົກສູງ...

(ຕໍ່ຈາກໜ້າ 4)

ແລະ ເນັ້ນການຮຽນຮູ້ ແບບປະຍຸກໃຊ້ ໂດຍມີການສົນທະນາທີ່ມີຜູ້ອຳນວຍຄວາມສະດວກໃນປະເດັນຕ່າງໆ; ການສົນທະນາແບບເປັນກຸ່ມ ເພື່ອແບ່ງປັນປະສົບການ, ສິ່ງທ້າທາຍ, ຂໍ້ຄິດເຫັນ ແລະ ກິດຈະກຳການໂຕ້ຕອບ ເຊັ່ນ:ການແຕ້ມຮູບເພື່ອສຳຫຼວດທັດສະນະ ແລະ ກະຕຸ້ນການມີສ່ວນຮ່ວມ, ກໍລະນີສຶກສາທີ່ອີງໃສ່ສະຖານະການທີ່ເກີດຂຶ້ນຈິງ, ການສ້າງແຜນກິດຈະກຳ ການສົ່ງເສີມຄວາມສະເໝີພາບຍິງ-ຊາຍລະດັບບຸກຄົນ ແລະ ເວທີສົນທະນາທີ່ລວມເອົາຜູ້ມີປະສົບການດ້ານການເປັນຜູ້ນຳທີ່ມີທັດສະນະຫຼາກຫຼາຍ ເພື່ອສົ່ງເສີມການສົນທະນາແລກປ່ຽນແບບເປີດກ້ວາງແລະຮຽນຮູ້ຮ່ວມກັນອັນໄດ້ ເຮັດໃຫ້ຜູ້ເຂົ້າຮ່ວມສາມາດທຳຄວາມເຂົ້າໃຈກ່ຽວກັບເພດພາວະ, ບົດບາດຍິງ-ຊາຍ ແລະຄຸນຄ່າຂອງຄວາມຫຼາກຫຼາຍໃນການນຳພາ-ຊີ້ນຳ ເພື່ອເປັນເຄື່ອງມືໃນການໄຈ້ແຍກ ແລະ ກຳຈັດແນວຄິດຄັບແຄບກ່ຽວກັບບົດບາດທາງເພດໃນອົງກອນຂອງຕົນ,ເສີມສ້າງຄວາມສາມາດໃນການນຳພາດ້ວຍການມີສ່ວນຮ່ວມ ແລະ ເປັນທຳ, ມີຄວາມເທົ່າທຽມລະຫວ່າງຍິງ-ຊາຍ, ເຄົາລົບເຊິ່ງກັນແລະກັນພາຍໃນສຳນັກງານອົງການລັດ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນໂດຍແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໄລຍະທີ II (CEGGA-Phase II).

**(ສີພອນ ຟາກໍ່ຈົງເຈ່ຍ)**

ເຝົ້າໄວ້ ໄດ້ຍິນດຽວ

❖ ວິເສດ ສະແຫວງສຶກສາ

# ຮ່ວມມືກັນສະກັດກັ້ນການລັກລອບ ຄ້າຂາຍວັດຖຸບູຮານະຄະດີ

ການລັກລອບຄ້າ-ຂາຍວັດຖຸບູຮານທີ່ມີຄຸນຄ່າທາງປະຫວັດສາດ ແລະ ວັດທະນະທຳ ໄດ້ກາຍເປັນອາຊະຍາກຳຂ້າມຊາດມາໄດ້ຫຼາຍທົດສະວັດແລ້ວ. ໃນຊຸມປີຕົ້ນໆ ຂອງສະຕະວັດຜ່ານມາ, ການລັກລອບ ຫຼື ປຸ້ນເອົາວັດຖຸບູຮານຄະດີນັ້ນ ຕິດພັນກັບຍຸກອານານິຄົມ ຄື ປະເທດລ່າເມືອງຂຶ້ນ ນອກຈາກກົດຂີ່ຂູດຮີດປະເທດທີ່ຕົກເປັນຫົວເມືອງຂຶ້ນແລ້ວ, ພວກເຂົາຍັງໄດ້ປຸ້ນເອົາຊັບສິນທີ່ມີຄ່າ ໃນນັ້ນລວມທັງວັດຖຸບູຮານທີ່ເປັນມິ່ງຂວັນເມືອງ, ເປັນສິ່ງຍອດຍິ່ງທາງດ້ານພູມປັນຍາສິລະປະສາດ ແລະ ປະຫວັດສາດ; ວັດຖຸອັນຊົງຄຸນຄ່າຈຳນວນຫຼວງຫຼາຍ ຖືກຂົນໄປປະດັບເອ້ຢູ່ຕາມຫໍພິພິທະພັນ, ຕາມສະຖານທີ່ທາງລັດຖະການຂອງປະເທດນັກລ່າອານານິຄົມ ແລະ ອີກຈຳນວນບໍ່ໜ້ອຍ ກໍຕົກໄປເປັນກຳມະສິດສ່ວນບຸກຄົນ. ພາຍຫຼັງຍຸກອານານິຄົມໄດ້ສິ້ນສຸດລົງ, ການລັກລອບຄ້າ-ຂາຍວັດຖຸບູຮານຄະດີ ໄດ້ກາຍເປັນແຫຼ່ງລາຍຮັບອັນມະຫາສານສຳລັບເຄືອຂ່າຍອາຊະຍາກຳ; ຍ້ອນແນວນີ້ເອງ, ຮູບການການຮ່ວມມືກັນໃນລະດັບພາກພື້ນ ແລະ ລະດັບໂລກ ຈຶ່ງໄດ້ກໍ່ຕົວຂຶ້ນເປັນລະບົບ ແລະ ມີກົນໄກປະສານງານຢ່າງຄັກແນ່ພາຍໃຕ້ຂອບສົນທິສັນຍາສາກົນ ແລະ ຂໍ້ຕົກລົງສອງຝ່າຍ ແລະ ຫຼາຍຝ່າຍ. ໃນປີ 1970, ອົງການສະຫະປະຊາຊາດ (ສປຊ) ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ຫຼື ອົງການອຸຍແນັສໂກ(UNESCO) ໄດ້ສ້າງສົນທິສັນຍາວ່າດ້ວຍການເກືອດຫ້າມ ແລະ ປ້ອງກັນການນຳເຂົ້າ-ສົ່ງອອກຜະລິດຕະພັນທາງວັດທະນະທຳ; ເນື້ອແທ້ຂອງສົນທິສັນຍາສະບັບນີ້ ແມ່ນເພື່ອປາບປາມການຄ້າວັດຖຸ ຫຼື ຜະລິດຕະພັນທາງສິລະປະ-ວັດທະນະທຳ. ໃນປີ 2017 ສະພາຄວາມໝັ້ນຄົງຂອງອົງການ ສປຊ (UN Security Council) ໄດ້ອອກມະຕິເລກທີ 2347 ເພື່ອປ້ອງກັນບໍ່ໃຫ້ມີການທຳລາຍມໍລະດົກທາງວັດທະນະທຳຢ່າງຜິດກົດໝາຍ; ສົນທິສັນຍາໃຫ້ຄວາມສຳຄັນໃນການສະກັດກັ້ນສາຍກ່ຽວໂຍງລະຫວ່າງການປຸ້ນ, ການລັກລອບວັດຖຸທາງວັດທະນະທຳ ແລະ ການສະໜອງດ້ານການເງິນໃຫ້ແກ່ລັດທິກໍ່ການຮ້າຍ. ສົນທິສັນຍາຂອງອຸຍແນັສໂກ ປີ 1970 ແລະ ມະຕິຂອງສະພາຄວາມໝັ້ນຄົງຂອງ ສປຊ ປີ 2017 ໄດ້ເພີ່ມຂີດຄວາມສາມາດໃນການຮ່ວມມືສາກົນເພື່ອປົກປ້ອງມໍລະດົກທາງວັດທະນະທຳ. ຫຼາຍປະເທດສາມາດສືບຫາ ແລະ ຄົ້ນພົບວັດຖຸບູຮານທີ່ຖືກລັກລອບເອົາໄປຂາຍຢູ່ຕ່າງປະເທດ ເປັນຈຳນວນບໍ່ໜ້ອຍ ຕົວຢ່າງເມື່ອປະມານ 5 ປີຜ່ານມາ, ທາງການຂອງປະເທດອັງກິດ ກໍສາມາດຄົ້ນພົບ ວັດຖຸບູຮານຄະດີ 2 ອັນທີ່ຖືກລັກລອບໄປຈາກປະເທດເນປານ ຄືໄມ້ຄວັດໃນສະຕະວັດທີ 16 ເປັນຮູບພະນາງ ໂຕຣານາ ແລະ ອັນທີສອງ ແມ່ນຫີນສະຫຼັກເປັນຮູບສາຊະນິກະຊົນຄົນໜຶ່ງກຳລັງນັ່ງຄູ້ເຂົ່າ, ຮູບຫີນສະຫຼັກນີ້ ສ້າງຂຶ້ນໃນສະຕະວັດທີ 18; ບູຮານຄະດີທັງສອງອັນ ຖືກລັກລອບໄປຈາກວັດແຫ່ງໜຶ່ງໃນເຂດຮ່ອມພູນະຄອນຫຼວງກັດມັນດູຂອງເນປານ ໃນລະຫວ່າງຊຸມປີ 1980-1990. ມະຕິ 2347 ຂອງສະພາຄວາມໝັ້ນຄົງ ສປຊ ໄດ້ຮຽກຮ້ອງໃຫ້ທຸກໆປະເທດ ມີມາດຕະການປ້ອງກັນດ້ວຍການຂຶ້ນທະບຽນວັດຖຸເກົ່າແກ່ທີ່ຊົງຄຸນຄ່າທັງໝົດໂດຍໄວ.

ອາຊຽນ ທີ່ປະເທດລາວເຮົາເປັນສະມາຊິກນັ້ນກໍມີຂໍ້ຕົກລົງຮ່ວມກັນເພື່ອປົກປັກຮັກສາວັດຖຸບູຮານຄະດີ ແລະ ລາວເຮົາກໍມີກົດໝາຍເປັນເຄື່ອງມືເພື່ອປ້ອງກັນອາຊະຍາກຳຄ້າ-ຂາຍວັດຖຸທີ່ມີຄຸນຄ່າທາງປະຫວັດສາດ, ວັດທະນະທຳ ແລະ ສິລະປະ. ແນວໃດກໍດີ, ເຫດການລັກລອບວັດຖຸບູຮານ ໂດຍສະເພາະແມ່ນພະພຸດທະຮູບນັ້ນ ກໍຍັງເຄີຍເປັນຂ່າວສ້າງຄວາມກັງວົນໃຈໃນສັງຄົມລາວເຮົາຢູ່; ດັ່ງນັ້ນ, ຈຶ່ງຄວນເຄັ່ງມາດຕະການໃນການປະຕິບັດກົດໝາຍທີ່ກ່ຽວຂ້ອງ ເພື່ອປ້ອງກັນບໍ່ໃຫ້ມີການລັກລອບຄ້າ-ຂາຍວັດຖຸບູຮານເຫຼົ່ານີ້, ພິເສດຕ້ອງຮຽນຮູ້ ແລະ ຄົ້ນຄວ້າສົນທິສັນຍາລະດັບພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງຢ່າງຈິງຈັງ.




## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຈາກນັ້ນ, ສສຊ ໄດ້ຮັບຮອງເອົາກົດໝາຍສະບັບນີ້ ດ້ວຍຄະແນນສຽງເຫັນດີເກືອບ 98%; ເຖິງຢ່າງໃດກໍຕາມ, ມີຜູ້ແທນປະກອບຄຳເຫັນຢ່າງຫຼາກຫຼາຍ ແລະ ກົງໄປກົງມາ ຕໍ່ເນື້ອໃນຕ່າງໆຂອງຮ່າງກົດໝາຍ. ສະນັ້ນ, ໃນກອງປະຊຸມຄັ້ງນີ້ ຈະໄດ້ສຸມໃສ່ຄົ້ນຄວ້າຢ່າງລະອຽດ ແລະ ເລິກເຊິ່ງ ເພື່ອເລືອກເຟັ້ນເອົາຄຳເຫັນຂອງ ສສຊ ມາປັບປຸງໃສ່ເນື້ອໃນກົດໝາຍແລະເນື່ອງຈາກເປັນການຮຽບຮຽງຄັ້ງສຸດທ້າຍ, ນອກຈາກຄຳເຫັນຂອງຜູ້ແທນແລ້ວ ຖ້າເຫັນວ່າຍັງມີຈຸດໃດ, ຄຳສັບຄຳເວົ້າໃດ ທີ່ບໍ່ທັນຈະແຈ້ງ ແລະ ສອດຄ່ອງ ກໍສາມາດຍົກຂຶ້ນຕື່ມ ເພື່ອເຮັດໃຫ້ຮ່າງກົດໝາຍສະບັບນີ້ມີເນື້ອໃນຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສົມບູນ ກ່ອນນຳສະເໜີປະທານສະພາແຫ່ງຊາດລົງລາຍເຊັນ.

**(ນາງ ອາລິນ ສຸພົມມະປະດິດ)**




# ການອິ່ນອອຍ

*#ບ່າວກະບື*

**ຫຼັງ**ຈາກຜິດຖຽງ ແລະ ສູ້ຢັນກັບຢ່າງໜັກ, ສາວດາວແກ້ວ ກໍຫອບໄປຫາແມ່ ພ້ອມທັງຮ້ອງໄຫ້ປ່ອຍນ້ຳຕາໄຫຼຍ້ອຍຍັ້ງ.

"ລູກຊິບໍ່ຄືນໄປເຫັນໜ້າບັກກ່ຳອີກໃນຊີວິດນີ້" ນາງປະກາດອອກມາ ທ່າມກາງສຽງສະອຶກສະອື້ນ "ພວກເຮົາມີລູກນຳກັນຫົກຄົນພໍ່ແຮງແລ້ວ, ມາບັດນີ້ ມັນພັດບອກວ່າມັນບໍ່ເຄີຍຮັກລູກຈັກດີ້"

ຝ່າຍແມ່ເຈົ້າອອຍລູກສາວວ່າ: "ແມ່ບອກບໍ່ໃຫ້ລູກອົບນຳເລື່ອງນີ້ຫຼາຍ... ລູກລອງຄິດເບິ່ງດູວ່າ ລູກຊິເບິ່ງລູກອອກມາຕື່ມອີກຈັກຄົນ ຖ້າມັນຫາກຮັກລູກ!"

# Consolation

*# BAOKBU*

After a bitter fight, Mrs Daokeo went to her mother's place and was uncontrollably tearful.

"I never want to see Bak Kam again in my life," she declared as she sobbed. "We had six children together, and now he tells me he never loved me." "Well, I tell you not to have much concern over the situation," consoled her mother "Just imagine how many more children would you have had if he had loved you !"

ຕາມພາສາ ກາຕູນ



ຖົມດິນຊະຊາຍ ຖົ້ມບ້ານ ກາຍເປັນເມືອງບາດານ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ